ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
PetroTrade
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ: 0021/ປທລ/2024
ນະຄອນຫຼວງວຽງຈັນ, ວັນທີ: 5/4/2024

ໜັງສືເຈ້ງເຊີນ

ຮຽນ: ທ່ານ ຜູ້ຖືຮຸ້ນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ທີ່ນັບຖື.
ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023.

- ອີງຕາມ ກົດລະບຽບ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ສະບັບ ລົງວັນທີ 13 ຕຸລາ 2014;
- ອີງຕາມມະຕິກອງປະຊຸມສະພາບໍລິຫານ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ຄັ້ງທີ 1/2024 ວັນ ທີ 07 ມີນາ 2024.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ("ບໍລິສັດ" ຫຼື "ປທລ") ຂໍຖືເປັນກຽດຮຽນເຊີນທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ທີ່ຈະໄດ້ຈັດຂຶ້ນໃນວັນທີ **30 ເມສາ 2024,** ເວລາ **08:30** ໂມງ (ເລີ່ມລົງທະບຽນເວລາ **08:00** ໂມງ), ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ ກຳແພງເມືອງ ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ເພື່ອພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງ ປະຊຸມທີ່ຄັດຕິດມາພ້ອມນີ້.

ບໍລິສັດໄດ້ແຈ້ງວັນ, ເວລາ ແລະ ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ຜ່ານເວັບໄຊຂອງຕະຫຼາດ ຫຼັກ ຊັບລາວ (www.lsx.com.la)

ຫວັງຢ່າງຍິ່ງວ່າ ທ່ານຄົງຈະສະລະເວລາອັນມີຄ່າຂອງທ່ານເຂົ້າຮ່ວມປະຊຸມກັບພວກເຮົາໃນຄັ້ງນີ້ດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ
ຮອງປະທານສະພາບໍລິຫານ

ກະຊວງ ອຸດສາຫະກຳ ແລະ ການຄ້າ
ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ
Petroleum Trading Lao Public Company
ນະຄອນ ຫຼວງ ວຽງຈັນ

ຄຳສອນ ສິດທິໄຊ

ເອກະສານຄັດຕິດ

1. ວາລະກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2023 (ເອກະສານຄັດຕິດ 1);
2. ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 (ເອກະສານຄັດຕິດ 2);
3. ເອກະສານລາຍງານການເງິນ ປະຈຳປີ 2023 (ເອກະສານຄັດຕິດ 3);
4. ຊີວະປະຫວັດຫຍໍ້ຂອງ ປະທານສະພາບໍລິຫານຄົນໃໝ່ ແລະ ສະມາຊິກສະພາບໍລິຫານອິດສະຫຼະ (ເອກະສານຄັດຕິດ 4);
5. ໃບມອບສັນທະ (ເອກະສານຄັດຕິດ 5);
6. ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີເພື່ອເຂົ້າຮ່ວມປະຊຸມ (ເອກະສານຄັດຕິດ 6);
7. ແຜນທີ່ສະຖານທີ່ຈັດປະຊຸມ (ເອກະສານຄັດຕິດ 7);

ໝາຍເຫດ

1. ຜູ້ຖືຮຸ້ນທຸກທ່ານ ຕ້ອງໄປຮັບເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆ ເລີ່ມຕັ້ງແຕ່ 08 ເມສາ 2024, ຢູ່ ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກ ຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານ ໂພນທັນ, ຖະໜົນ ກຳແພງເມືອງ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ໂທລະສັບ: (856-21) 454361-4;
2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ;
3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງ ກະລຸນາປະກອບຂໍ້ມູນ ແລະ ລົງ ລາຍເຊັນໃນໃບມອບສັນທະ ຕາມ (ເອກະສານຄັດຕິດ 5) ທີ່ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ;
4. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມປະຊຸມຈະຕ້ອງນຳເອກະສານ ຫຼື ຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມຕາມ ລາຍລະອຽດທີ່ໄດ້ລະບຸໄວ້ໃນ (ເອກະສານຄັດຕິດ 6) ທີ່ໄດ້ຄັດຕິດມາພ້ອມ ແລະ ສົ່ງມອບໃຫ້ປະທານກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້;
5. ໃນກໍລະນີທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ສະມາຊິກສະພາບໍລິຫານ ອິດສະຫຼະ ຂອງບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສັນທະ ແລະ ໝາຍ (✓) ໃນ □ ເພື່ອ ເລືອກເອົາສະມາຊິກສະພາບໍລິຫານ ອິດສະຫຼະ ຂອງບໍລິສັດ ທ່ານໃດທ່ານໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສັນທະ ດັ່ງກ່າວພ້ອມເອກະສານປະກອບ ສົ່ງເຖິງ ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ, ເລຂານຸການຂອງບໍລິສັດ **ທ່ານ ຄຳພຸດ ສົມບູນ** ສຳນັກງານຕັ້ງຢູ່ ຖະໜົນ ກຳແພງເມືອງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງ ວຽງຈັນ ແລະ ກະລຸນາສົ່ງເຖິງບໍລິສັດກ່ອນ 3 ວັນ ກ່ອນມື້ປະຊຸມ;
6. ຖ້າຫາກທ່ານໃດມີຂໍ້ສົງໄສ ແລະ ຄຳຖາມກ່ຽວກັບໃບມອບສັນທະ ລວມທັງລາຍລະອຽດໃນໜັງສືເຊີນປະຊຸມສະບັບ ນີ້ ທ່ານສາມາດສອບຖາມ **ທ່ານ ຄຳພຸດ ສົມບູນ** ເບີໂທ 020 5555 9043.

<u>ເອກະສານຄັດຕິດ 1</u>

<u>ວາລະທີ 01: ພິຈາລະນາ ແລະ ຮັບຮອງເອົາ ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022</u>

<u>ລາຍລະອຽດ</u>: ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022 ໄດ້ຈັດຂຶ້ນໃນວັນທີ 25 ພຶດສະພາ 2023 ໂດຍກອງປະຊຸມໄດ້ພິຈາລະນາກິດຈະກຳຕ່າງໆ ເຊິ່ງກອງປະຊຸມດັ່ງກ່າວໄດ້ເຮັດບົດບັນທຶກຕາມເນື້ອໃນຂອງກອງປະຊຸມຢ່າງຖືກຕ້ອງ ໂດຍມີລາຍລະອຽດຂອງບົດບັນທຶກກອງປະຊຸມຕາມ **(ເອກະສານຄັດຕິດ 2).**

<u>ຄຳເຫັນຂອງສະພາບໍລິຫານ:</u> ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງເອົາວາລະນີ້.

<u>ຄະແນນສຽງທີ່ຕ້ອງໃຊ້:</u> ອີງຕາມກົດໝາຍວ່າດ້ວຍ ວິສາຫະກິດ ທີ່ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິກອງປະຊຸມດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 02: ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2023 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2023</u>

<u>ລາຍລະອຽດ:</u>

I. **ຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2023 ມີດັ່ງນີ້:**

1) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ແຜນປີ 2023 ກັບ ຍອດຂາຍຕົວຈິງ

ລູກຄ້າ	ແຜນ 2023	ຍອດຂາຍ 2023	ສ່ວນຕ່າງ ຍອດຂາຍ 2023	
	ລິດ	ລິດ	ລິດ	ເປັນ %
B2B	49,284,000	60,904,000	11,620,000	23.58%

2) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ຍອດຂາຍປີ 2023 ກັບ ຍອດຂາຍປີ 2022

ລູກຄ້າ	ຍອດຂາຍ 2023	ຍອດຂາຍ 2022	ສ່ວນຕ່າງ ຍອດຂາຍ 2022-2023	
	ລິດ	ລິດ	ລິດ	ເປັນ %
B2B	49,284,000	77,764,000	-28,480,000	-57.79%

❖ ຕາຕະລາງຍອດຂາຍລູກຄ້າ Spot

ລູກຄ້າ	ແຜນ 2023	ຍອດຂາຍ 2023	ສ່ວນຕ່າງ ຍອດຂາຍ 2023	
	ລິດ	ລິດ	ລິດ	ເປັນ %
SPOT	75,000,000	85,866,378	10,866,378	14.49%

❖ **ຕາຕະລາງຍອດຂາຍລູກຄ້າປ້ຳນ້ຳມັນ:**

1) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ແຜນປີ 2023 ກັບ ຍອດຂາຍຕົວຈິງ

ລ/ດ	ລູກຄ້າ	ແຜນ	ຍອດຂາຍ	ສ່ວນຕ່າງ ແຜນ-ຍອດຂາຍ	
		ລິດ	ລິດ	ລິດ	ເປັນ %
1	ປ້ຳນ້ຳມັນພລາຕິນຳ/Platinum	12,475,177	11,352,000	-1,123,177	-9.89%
2	ປ້ຳນ້ຳມັນໂກລ/Gold	28,343,369	27,782,000	-561,369	-2.02%
3	ປ້ຳນ້ຳມັນມາດຕະຖານ/Standard	30,117,252	25,813,000	-4,304,252	-16.67%
4	ປ້ຳນ້ຳມັນ ທ້ອງຖິ່ນພັດທະນາ/Thongthin	10,514,134	10,442,000	-72,134	-0.69%
ລວມ		81,449,931	75,389,000	-6,060,931	-8.04%

2) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ຍອດຂາຍປີ 2023 ກັບ ຍອດຂາຍປີ 2022

ລ/ດ	**ລູກຄ້າ**	**ຍອດຂາຍ 2023**	**ຍອດຂາຍ 2022**	**ສ່ວນຕ່າງ ຍອດຂາຍ 2022-2023**	
		ລິດ	**ລິດ**	**ລິດ**	**ເປັນ %**
1	ປ້ຳນ້ຳມັນພລາຕິນຳ/Platinum	11,352,000	12.734.750	-1,382,750	-12%
2	ປ້ຳນ້ຳມັນ ໂກລ/Gold	27,782,000	29.647.250	-1,865,250	-7%
3	ປ້ຳນ້ຳມັນມາດຕະຖານ/Standard	25,813,000	30.224.000	-4,411,000	-17%
4	ປ້ຳນ້ຳມັນທ້ອງຖິ່ນພັດທະນາ/Thongthin	10,442,000	11.667.000	-1,225,000	-12%
ລວມ		75,389,000	84.273.000	-8,884,000	-48%

❖ **ຕາຕະລາງຍອດຂາຍລູກຄ້າທັງໝົດ**

1) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ແຜນປີ 2023 ກັບ ຍອດຂາຍປີ 2023

ລ/ດ	ລູກຄ້າ	ແຜນ 2023	ຍອດຂາຍ 2023	ສ່ວນຕ່າງ ແຜນ-ຍອດຂາຍ 2023	
		ເປັນ ລິດ	ເປັນ ລິດ	ເປັນ ລິດ	ເປັນ %
1	ລູກຄ້າໂຄງການ/B2B	49,284,000	60,904,000	11,620,000	24%
2	ລູກຄ້າປ້ຳນ້ຳມັນ/Gas Station	81,449,930	75,389,000	-6,060,930	-7%
3	SPOT	75,000,000	85,866,378	10,866,378	14%
ລວມ		205,733,930	222,159,378	16,425,448	31%

2) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ຍອດຂາຍ 2022 ກັບ ຍອດຂາຍ 2023

ລ/ດ	ລູກຄ້າ	ຍອດຂາຍ 2023	ຍອດຂາຍ 2022	ສ່ວນຕ່າງ ຍອດຂາຍ 2022-2023	
		ເປັນ ລິດ	ເປັນ ລິດ	ເປັນ ລິດ	ເປັນ %
1	ລູກຄ້າໂຄງການ/B2B	60,904,000	77,764,000	-16,860,000	-27.68%
2	ລູກຄ້າປັ໊ມນ້ຳມັນ/Gas Station	75,389,000	52,940,490	22,448,510	42.40%
3	SPOT	85,866,378	104,343,580	-18,477,202	-21.52%
	ລວມ/Total	222,159,378	235,048,070	-12,888,692	-5.08%

❖ ການບໍລິຫານສາງນ້ຳມັນ ໃນປີ 2022

1. ການຮັບເຂົ້າ ແລະ ການຈ່າຍອອກສາງນ້ຳມັນທັງໝົດ

ລ/ດ	ລາຍການ	2023	2022	ສ່ວນຕ່າງ 2022-2023	
		ເປັນ ລິດ	ເປັນ ລິດ	ເປັນ ລິດ	ເປັນ %
1	ການຮັບເຂົ້າສາງທັງໝົດ	136,770,415	164,101,797	27,331,382	-19.98%
2	ການຈ່າຍອອກສາງທັງໝົດ	136,588,881	163,212,423	26,623542	-19.48%
	ລວມ	273,359,296	327,314,220	-707,840	-19.74%

2. ຄ່າສະເລ່ຍອາຍລະເຫີຍ ຂອງ ນ້ຳມັນ ແຕ່ລະຊະນິດ

- ຄ່າສະເລ່ຍອາຍລະເຫີຍ ຂອງ ນ້ຳມັນແອດຊັງ 95 ໃນລະຫວ່າງເກັບຮັກສາເທົ່າກັບ -1,734ລິດ ຂອງຍອດຮັບທັງໝົດ 715,984 ລິດ ຢູ່ໃນເກນມາດຕະຖານໃນອັດຕາສະເລ່ຍ -0.23 ສ່ວນຮ້ອຍ;
- ຄ່າສະເລ່ຍອາຍລະເຫີຍ ຂອງ ນ້ຳມັນແອດຊັງ 91 ໃນລະຫວ່າງເກັບຮັກສາເທົ່າກັບ -36,172 ລິດ ຂອງຍອດຮັບທັງໝົດ 29,938,008 ລິດ ຢູ່ໃນເກນມາດຕະຖານໃນອັດຕາສະເລ່ຍ -0.12 ສ່ວນຮ້ອຍ;
- ຄ່າສະເລ່ຍອາຍລະເຫີຍ ຂອງ ນ້ຳມັນກາຊວນ ໃນລະຫວ່າງເກັບຮັກສາເທົ່າກັບ -76,300 ລິດ ຂອງຍອດຮັບທັງໝົດ 105,934,889 ລິດ ຢູ່ໃນເກນມາດຕະຖານໃນອັດຕາສະເລ່ຍ -0.07 ສ່ວນຮ້ອຍ.

❖ ບຸກຄະລາກອນ

ບໍລິສັດ ປິໂຕຣລ້ຽມ ເທຣດດິ້ງລາວ ມະຫາຊົນ ມີພະນັກງານທັງໝົດຈຳນວນ 156 ຄົນ, ໃນນັ້ນມີເພດຍິງຈຳນວນ 91 ຄົນ. ການດຳເນີນງານດ້ານບຸກຄະລາກອນ ປະຈຳປີ 2022 ຜ່ານມາແມ່ນເນັ້ນໃສ່ການຮັບປະກັນຄວາມພຽງພໍ ຂອງພະນັກງານ, ການສັນຫາບຸກຄະລາກອນທີ່ເໝາະສົມເຂົ້າຕຳແໜ່ງທີ່ຫວ່າງຢ່າງມີປະສິດທິພາບ, ເບິ່ງແຍງສະຫວັດດີການຂອງພະນັກງານຕາມກົດລະບຽບພາຍໃນບໍລິສັດ ແລະ ຕາມກົດໝາຍແຮງງານວາງອອກ. ພ້ອມນີ້ກໍ່ຍັງໄດ້ຈັດໃຫ້ມີການຝຶກອົບຮົມໃນຫົວຂໍ້ຕ່າງໆ ເພື່ອເພີ່ມທັກສະ ແລະ ຄວາມຮັບຮູ້ຂອງພະນັກງານພາຍໃນອົງກອນດັ່ງນີ້:

- ການເຜີຍແຜ່ນະໂຍບາຍບໍລິສັດ, ມາດຕະຖານ ISO ແລະ ກົດໝາຍປະຈຳສົກປີ 2023;
- ເຜີຍແຜ່ກົດລະບຽບ ແລະ ນະໂຍບາຍບໍລິສັດ (ສຳລັບພະນັກງານເຂົ້າໃໝ່);
- ເຜີຍແຜ່ລະບຽບຄວາມປອດໄພ ແລະ ສິ່ງແວດລ້ອມ;
- ຝຶກອົບຮົມລະບົບບັນຊີມາດຕະຖານໃໝ່ (IFRS);
- ຝຶກອົບຮົມການຂັບຂີ່ປອດໄພ;

- ຝຶກອົບຮົມການແຈ້ງພາສີອາກອນທົ່ວໄປ;
- ຝຶກອົບຮົມການການນຳໃຊ້ຊັອຟແວ MS Excel ຂັ້ນ Intermediate;
- ຝຶກອົບຮົມການດັບໄຟ;
- ເຜີຍແຜ່ຂອບເຂດສິດອຳນາດໃນການອະນຸມັດເອກະສານພາຍໃນ.

ໃນສົກປີ 2023 ທີ່ຜ່ານມາ ບໍລິສັດໄດ້ຮ່ວມຊ່ວຍເຫຼືອສັງຄົມຜ່ານໂຄງການຕ່າງໆ ອີງຕາມຄວາມຈຳເປັນ ແລະ ເປັນການຕອບແທນຄືນແກ່ສັງຄົມ ລວມມູນຄ່າ **1,034,628,422 ກີບ**

❖ **ການມອບພັນທະອາກອນ ແລະ ອື່ນໆ ເຂົ້າລັດ ປະຈຳປີ 2023**

ປະເພດອາກອນ	ປີ 2021	ປີ 2022	ປີ 2023
ພາສີນຳເຂົ້າ	84,433,127,700	204,387,894,555	212,376,419,048
ອກຊ	268,779,530,700	214,463,864,169	118,770,619,941
ອມພ	143,983,943,199	243,242,799,714	231,616,178,284
ບຸລະນະທາງ	107,570,320,000	123,195,666,360	112,531,120,000
ຄ້າງເຮ	109,298,940,000	86,953,600,000	154,263,520,000
ອິມິດເຕ້	261,876,000	-	-
ຄຸນນະພາບ	2,764,776,000	3,703,790,000	7,574,210,000
ໃບແຈ້ງພາສີ	130,714,999	181,957,300	289,796,050
ຄ່າຢອດສານ ມາກເກ້			336,330,000
ອມພ ຈ່າຍເພີ້ມ ປະຈຳເດືອນ	26,804,172,170	24,156,455,500	43,893,953,108
ອາກອນກຳໄລ	52,884,234	-	7,900,000,000
ອາກອນເງິນເດືອນ	441,733,970	456,209,631	2,085,594,446
ລວມ:	744,522,018,973	900,742,237,229	891,637,740,877

ເອກະສານລາຍງານການເງິນ ປະຈຳປີ 2023 ສາມາດສະຫຼຸບຕົວເລກໄດ້ດັ່ງນີ້: *ຫົວໜ່ວຍ: ກີບ*

ລາຍການ	2023 (ສະບັບຮ່າງ)	2022
ຊັບສິນທັງໝົດ	1,484,266,660,303	1,530,014,744,335
ໜີ້ສິນທັງໝົດ	1,067,101,248,964	1,070,484,088,070
ສ່ວນຂອງຜູ້ຖືຮຸ້ນ	417,165,411,339	459,530,656,265
ລາຍຮັບທັງໝົດ	58,940,648,838	68,719,460,416
ກຳໄລ/(ຂາດທຶນ) ສຸດທິ	(42,365,244,926)	(5,966,392,567)
ກຳໄລສຸດທິຕໍ່ຮຸ້ນ	(180)	(25)

ລາຍລະອຽດ (ຮ່າງ) ເອກະສານລາຍງານການເງິນ ປະຈຳປີ 2023 **(ເອກະສານຄັດຕິດ 3)**

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາ ລະນາຮັບຮອງເອົາວາລະນີ້.

<u>ຄະແນນສຽງທີ່ຕ້ອງໃຊ້:</u> ອີງຕາມກົດໝາຍວ່າດ້ວຍ ວິສາຫະກິດ ທີ່ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິກອງປະຊຸມ ດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 03: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024</u>

<u>ລາຍລະອຽດ</u>: ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024 ມີດັ່ງນີ້:

ໃນປີ 2024 ຈະເປັນປີທີ່ມີຄວາມທ້າທາຍຄັ້ງໃຫຍ່ ສຳລັບບໍລິສັດ ເນື່ອງຈາກພວກເຮົາຈະຕ້ອງໄດ້ປັບປຸງລະບົບການ ບໍລິຫານຈັດການ ຈາກການດຳເນີນທຸລະກິດທີ່ຂາດທຶນສະສົມໃນຊຸມປີຜ່ານມາ ແລະ ຈຳເປັນຕ້ອງໄດ້ມີການຊິດເຊີຍ ຈຳນວນຍອດຂາຍທີ່ຫາຍໄປຈາກລູກຄ້າໂຄງການທີ່ການກໍ່ສ້າງໄດ້ສຳເລັດໄປແລ້ວ. ດັ່ງນັ້ນ. ບໍລິສັດຈຶ່ງຕັດສິນໃຈນຳໃຊ້ຍຸດ ທະສາດທາງການຕະຫຼາດເຊິງລຸກ ແລະ ມີຄວາມເໝາະສົມຫຼາຍຂຶ້ນ ລວມທັງຍຸດທະສາດທາງການຕະຫຼາດພາຍໃນປະເທດ ອີກດ້ວຍ.

1) ການຂະຫຍາຍຕົວ ແລະ ຊິດເຊີຍການຂາດທຶນໃນປີຊຸມຜ່ານມາ.
   - ໂຄງການ B2B: ເພີ່ມປະລິມານການສະໜອງນ້ຳມັນໃຫ້ຫຼາຍຂຶ້ນ ໂດຍໃຊ້ປະໂຫຍດຈາກຄວາມໄດ້ປຽບດ້ານ ອຸປະທານ ແລະ ໂລຈິສຕິກຂອງບໍລິສັດ (ທຽບກັບຜູ້ນຳເຂົ້າລາຍອື່ນ) ພ້ອມກັບການປະຕິບັດຕາມກົດ ລະບຽບຂອງລັດຖະບານ; ເພີ່ມຖານລູກຄ້າໃນຮູບແບບ B2B ໃຫ້ຫຼາຍຂຶ້ນ (ໂດຍສະເພາະແມ່ນ ກຸ່ມລູກຄ້າ ຂຸດຄົ້ນບໍ່ແຮ່ ແລະ ຂາຍສົ່ງ);
   - ການຂາຍຍ່ອຍ: ເພີ່ມປະລິມານການສະໜອງນ້ຳມັນໃຫ້ກັບລູກຄ້າປະຈຸບັນໃຫ້ຫຼາຍຂຶ້ນ ແລະ ລູກຄ້າ COCO ລາຍໃໝ່ທີ່ຫາມາໄດ້. ປັບປຸງພາບລັກ ແລະ ເພີ່ມມູນຄ່າໃຫ້ກັບທຸລະກິດນ້ຳມັນ ແລະ ທຸລະກິດຮ້ານ ສະດວກຊື້ໃນປ້ຳນ້ຳມັນ ເພື່ອໃຫ້ມີກຳໄລ ແລະ ປະລິມານການຂາຍເພີ່ມຂຶ້ນ:
     - ສົ່ງເສີມໃຫ້ລູກຄ້ານຳໃຊ້ການເຕີມນ້ຳມັນດ້ວຍບັດ (ບັດ PlusCard)
     - ພັດທະນາລະບົບການຈຳໜ່າຍນ້ຳມັນເຄື່ອງໃຫ້ໄດ້
     - ພັດທະນາຮ້ານກາເຟ
   - ການຕະຫຼາດ ແລະ ການສົ່ງເສີມການຂາຍ ໂດຍເພີ່ມກຳໄລໃຫ້ຫຼາຍຂຶ້ນ ໂດຍການຫຼຸດຕົ້ນທຶນ. ສືບຕໍ່ຕິດຕາມ ແລະ ຮ່ວມມືກັບບັນດາບໍລິສັດອຸດສາຫະກຳ ເພື່ອຮັກສາສ່ວນແບ່ງທາງການຕະຫຼາດ/ຫຼຸດຄ່າໃຊ້ຈ່າຍດ້ານຕົ້ນ ທຶນ, ປະກັນໄພ ແລະ ການຂົນສົ່ງສິນຄ້າ.
2) ເພີ່ມປະສິດທິພາບທາງດ້ານການດຳເນີນງານ
   - ສືບຕໍ່ ບໍລິຫານຈັດການຄ່າໃຊ້ຈ່າຍດ້ານການດຳເນີນງານ ແລະ ຄ່າໃຊ້ຈ່າຍດ້ານການລົງທຶນໃຫ້ມີປະສິດທິພາບ ໂດຍການດັດປັບໂຄງສ້າງ ແລະ ການລົງທຶນຂອງບໍລິສັດ ໃຫ້ໄດ້ຜົນຕອບແທນໄວ້ທີ່ສຸດ.
   - ປັບປຸງປະສິດທິພາບໃນການດ□ຳເນີນງານຄືນໃໝ່, ຂະຫຍາຍສາງ□ ້ຳມັນໃຫ້ສາມາດບັນຈຸປະລິມານ ນ້ຳມັນໄດ້ຫຼາຍຂຶ້ນ ແລະ ນຳໃຊ້ໃຫ້ເກີດປະໂຫຍດສູງສຸດ ເພື່ອຫຼຸດຜ່ອນການລົງທຶນໃນການຂະຫຍາຍສາງ ນ້ຳມັນ.
3) ນະໂຍບາຍທາງດ້ານການເງິນ
   - ຫຼຸດອັດຕາສ່ວນລູກໜີ້ການຄ້າຂອງບໍລິສັດໃນປີ 2023 ໃຫ້ຫຼາຍທີ່ສຸດ,
   - ຫຼຸດຜ່ອນຄວາມສ່ຽງສິນເຊື່ອເບີກເກີນບັນຊີຂອງບໍລິສັດ ກັບບັນດາຜູ້ສະໜອງ,
   - ບໍລິຫານ ຄວາມສ່ຽງດ້ານສິນເຊື່ອຂອງລາຄານ້ຳມັນອ້າງອີງໃນປະຈຸບັນ,
   - ຊອກຫາຊ່ອງທາງຫຼຸດຄວາມສ່ຽງ ການຂາດທຶນຈາກອັດຕາແລກປ່ຽນໃຫ້ຫຼາຍທີ່ສຸດ.

4) ວັດທະນະທຳອົງກອນ
   - ສົ່ງເສີມ ພະນັກງານທີ່ມີປະສິດທິພາບສູງ ໄປສູ່ບົດບາດໜ້າວຽກທີ່ທ້າທາຍຍິ່ງຂຶ້ນ.
   - ພັດທະນາຂີດຄວາມສາມາດຂອງພະນັກງານ - ສົ່ງເສີມການກ້າວຂ້າມໄປສູ່ການປ່ຽນແປງ ແລະ ຝຶກອົບຮົມໜ້າວຽກໃນສາຍງານອື່ນ.
   - ຊຸກຍູ້ ໃຫ້ມີການຄິດຄົ້ນນະວັດຕະກຳໃໝ່ໆ.
5) ແຜນຍອດຂາຍໃນປີ 2024

i) ລູກຄ້າໂຄງການ/B2B

ລູກຄ້າ	ແຜນ ປີ 2024 (ລິດ)
B2B & SPOT	**166,177,000**

ii) ລູກຄ້າປ້ຳນ້ຳມັນ

ລ/ດ	ລູກຄ້າ	ແຜນ ປີ 2024 (ລິດ)
1	ປ້ຳນ້ຳມັນ ພລາຕິນຳ/Platinum	**91,776,000**
2	ປ້ຳນ້ຳມັນ ໂກລ/Gold	
3	ປ້ຳນ້ຳມັນ ມາດຕະຖານ/Standard	
4	ປ້ຳນ້ຳມັນ ທ້ອງຖິ່ນພັດທະນາ/Thongthin	
ລວມ		**257,953,000**

ນອກຈາກຂະຫຍາຍຍອດຂາຍນ້ຳມັນແລ້ວ ຍັງມີການຂະຫຍາຍປ້ຳນ້ຳມັນ ເພີ່ມອີກ 6 ປ້ຳ ຄືດັ່ງນີ້:
- ປ້ຳນ້ຳມັນ ໂກລ/Gold/Platinum ຈຳນວນ 1 ປ້ຳ; ແລະ
- ປ້ຳນ້ຳມັນ ມາດຕະຖານ/Standard ຈຳນວນ 5 ປ້ຳ.

iii) ລູກຄ້ານ້ຳມັນເຕົາ, ຢາງໝາກຕອຍ ແລະ ນ້ຳມັນເຄື່ອງ

ລ/ດ	ລູກຄ້າ	ແຜນ ປີ 2024 (ລິດ)
1	ນ້ຳມັນເຕົາ	ຕາມການສັ່ງຊື້ຂອງ ລູກຄ້າ
2	ຢາງໝາກຕອຍ	ຕາມການສັ່ງຊື້ຂອງ ລູກຄ້າ
3	ນ້ຳມັນເຄື່ອງ	ຕາມການສັ່ງຊື້ຂອງ ລູກຄ້າ
ລວມ/Total		

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາ ລະນາຮັບຮອງເອົາວາລະນີ້.

<u>ຄະແນນສຽງທີ່ຕ້ອງໃຊ້:</u> ອີງຕາມກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 04: ພິຈາລະນາ ແລະ ຮັບຮອງບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2023 ເນື່ອງມາຈາກບໍລິສັດ ຂາດທຶນໃນຊຸມປີຜ່ານມາ</u>

<u>ລາຍລະອຽດ</u>: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ ລົງວັນທີ 29 ທັນວາ 2022, ມາດຕາ 153 "ການແບ່ງເງິນປັນຜົນ" ຫ້າມບໍ່ໃຫ້ບໍລິສັດຈ່າຍເງິນປັນຜົນ ເມື່ອບໍລິສັດຍັງມີການຂາດທຶນສະສົມຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ.

ດັ່ງນັ້ນ, ສະພາບໍລິຫານ ຈຶ່ງເຫັນດີຮັບຮອງການບໍ່ປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2023 ເນື່ອງມາຈາກບໍລິສັດ ຍັງມີການຂາດທຶນສະສົມຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ ແລະ ສະເໜີນຳກຳໄລສຸດທິປະຈຳປີ ເພື່ອຫັກເຂົ້າຂາດທຶນສະສົມ ລໍຖ້າແບ່ງປັນ.

<u>ຄຳເຫັນຂອງສະພາບໍລິຫານ:</u> ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງເອົາວາລະນີ້.

<u>ຄະແນນສຽງທີ່ຕ້ອງໃຊ້:</u> ອີງຕາມກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນ ສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 05: ພິຈາລະນາ ແລະ ຮັບຮອງ ແຕ່ຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ PriceWaterhouseCooper (Lao) Sole Co., Ltd ("PwC") ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2024 ບໍ່ເກີນ 37.000 ໂດລາສະຫະລັດ</u>

<u>ລາຍລະອຽດ</u>: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ ລົງວັນທີ 29 ທັນວາ 2022 ມາດຕາ 152 ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນເປັນຜູ້ເລືອກຕັ້ງຜູ້ກວດສອບບັນຊີ ແລະ ຄ່າຈ້າງຂອງຜູ້ກວດສອບບັນຊີ ໂດຍສະພາບໍລິຫານໄດ້ພິຈາລະນາເຫັນຄວນໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາ ແຕ່ງຕັ້ງ PWC ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2024 ໂດຍກຳນົດຄ່າຈ້າງບໍ່ເກີນ 37.000 ໂດລາ ສະຫະລັດ; PWC ເປັນບໍລິສັດກວດສອບບັນຊີພາຍນອກທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກ ຊັບ. ປທລ ໄດ້ໃຊ້ບໍລິການ PWC ເປັນຜູ້ກວດສອບບັນຊີພາຍນອກແຕ່ປີ 2018 ຫາ 2023 ເຫັນວ່າ PWC ມີປະສົບການ , ມີຄວາມລະອຽດຮອບຄອບໃນການທົບທວນ. ຊຶ່ງລາຍລະອຽດຄ່າຈ້າງແຕ່ລະປີມີດັ່ງລຸ່ມນີ້:

ປີ	ມູນຄ່າການກວດສອບ
2018	55.000
2019	34.000
2020	34.000
2021	32.000
2022	32.000
2023	32.000
2024	ບໍ່ເກີນ 37.000

<u>ຄຳເຫັນຂອງສະພາບໍລິຫານ:</u> ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາ ລະນາຮັບຮອງເອົາວາລະນີ້.

<u>ຄະແນນສຽງທີ່ຕ້ອງໃຊ້:</u> ອີງຕາມກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນ ສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 06: ພິຈາລະນາ ແລະ ຮັບຮອງ ການລາອອກຈາກຕຳແໜ່ງ ປະທານສະພາບໍລິຫານ ປທລ ຂອງ ທ່ານ ຫວ່າງ ຣັຕະນະວົງສ໌ ອັນເນື່ອງມາຈາກຄົບວາລະ</u>

<u>ລາຍລະອຽດ</u>: ອີງຕາມຂໍ້ຕົກລົງວ່າດ້ວຍສະພາບໍລິຫານ ສະບັບເລກທີ 10/ຄຄຊ, ລົງວັນທີ 26 ເມສາ 2019. ອາຍຸຂອງ ສະພາບໍລິຫານໜຶ່ງສະໄໝເທົ່າ 2 ປີ ຊຶ່ງທ່ານ ຫວ່າງ ຣັຕະນະວົງສ໌ ດຳລົງຕຳແໜ່ງເປັນປະທານສະພາບໍລິຫານ ປທລ ໃກ້ຄົບ ວາລະ 2022-2024 ແລ້ວ ແລະ ມີຈຸດປະສົງຂໍລາອອກຈາກຕຳແໜ່ງ ປະທານສະພາບໍລິຫານ ປທລ.

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາ ລະນາຮັບຮອງເອົາວາລະນີ້.

<u>ຄະແນນສຽງທີ່ຕ້ອງໃຊ້:</u> ອີງຕາມກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນ ສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 07: ພິຈາລະນາ ແລະ ຮັບຮອງ ທ່ານ ສີລາ ວຽງແກ້ວ ເປັນ ປະທານສະພາບໍລິຫານ ອິດສະລະ ປທລ</u>

<u>ລາຍລະອຽດ</u>: ອີງຕາມຂໍ້ຕົກລົງວ່າດ້ວຍສະພາບໍລິຫານ ສະບັບເລກທີ 10/ຄຄຊ, ລົງວັນທີ 26 ເມສາ 2019. ໂຄງ ປະກອບດ້ານບຸກຄະລາກອນຂອງສະພາບໍລິຫານຕ້ອງມີປະທານສະພາບໍລິຫານ ແລະ ເນື່ອງຈາກ ປະທານສະພາບໍລິຫານຜູ້ ເກົ່າ ໄດ້ລາອອກ ດັ່ງນັ້ນ, ບໍລິສັດຈຶ່ງແຕ່ງຕັ້ງທ່ານ ສີລາ ວຽງແກ້ວ ເປັນ ປະທານສະພາບໍລິຫານ ປທລ ຜູ້ໃໝ່.

ລາຍລະອຽດຊີວະປະຫວັດຂອງ ທ່ານ ປະທານສະພາບໍລິຫານຄົນໃໝ່ **(ເອກະສານຄັດຕິດ 4)**

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາ ລະນາຮັບຮອງເອົາວາລະນີ້.

<u>ຄະແນນສຽງທີ່ຕ້ອງໃຊ້:</u> ອີງຕາມກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນ ສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 08: ພິຈາລະນາ ແລະ ຮັບຮອງອາຍຸການຂອງສະມາຊິກສະພາບໍລິຫານ ປທລ ປະຈຳສົກປີ 2025-2027</u>

<u>ລາຍລະອຽດ</u>: ອີງຕາມຂໍ້ຕົກລົງວ່າດ້ວຍ ສະພາບໍລິຫານ ສະບັບເລກທີ 10/ຄຄຊ, ລົງວັນທີ 26 ເມສາ 2019; ສະມາຊິກ ສະພາບໍລິຫານ ມີອາຍຸການ 2 ປີ ແລະ ສະພາບໍລິຫານຂອງ ປທລ ຊຸດປະຈຸບັນ (2022-2024) ໄດ້ຮັບການແຕ່ງຕັ້ງໂດຍ ກອງປະຊຸມຜູ້ຖືຮຸ້ນປະຈຳປີ 2021 ເຊິ່ງຈະຄົບວາລະໃນປີນີ້ ແລະ ເພື່ອເຮັດໃຫ້ການຄຸ້ມຄອງບໍລິຫານຂອງ ປທລ ດ□ານເນີນ ໄປຢ່າງຕໍ່ເນື່ອງ. ດັ່ງນັ້ນ, ປທລ ຈຶ່ງສະເໜີໃຫ້ ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ ອາຍຸການຂອງ ສະມາຊິກສະພາບໍລິຫານ ປທລ ປະຈຳສົກປີ 2025-2027 ໂດຍມີລາຍຊື່ ແລະ ຕຳແໜ່ງຕໍ່ໄປນີ້:

1. ທ່ານ ສີລາ ວຽງແກ້ວ : ປະທານສະພາບໍລິຫານ ອິດສະລະ;
2. ທ່ານ ຄຳສອນ ສິດທິໄຊ : ຮອງປະທານສະພາບໍລິຫານ;
3. ທ່ານ ມາກ ລູອັນ : ສະມາຊິກສະພາບໍລິຫານ;
4. ທ່ານ ນາງ ແສງເດືອນ ກ້ຽວສຸວັດ : ສະມາຊິກສະພາບໍລິຫານ;

5. ທ່ານ ວຽງຄອນ ສິດທິໄຊ : ປະທານຄະນະກຳມະການເສດຖະກິດ, ສະມາຊິກສະພາບໍລິຫານ ອິດສະລະ;
6. ທ່ານ ບຸນຖັນ ວົງສຸລິ : ປະທານຄະນະກຳມະການກວດກາຄວາມສ່ຽງພາຍໃນ, ສະມາຊິກສະພາບໍລິຫານ ອິດສະລະ;
7. ທ່ານ ສຈ ດາວອນ ຫວ່າງວິຈິດ : ປະທານຄະນະກຳມະການກວດສອບພາຍໃນ, ສະມາຊິກສະພາບໍລິຫານ ອິດສະລະ.

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາ ລະນາຮັບຮອງເອົາວາລະນີ້.

<u>ຄະແນນສຽງທີ່ຕ້ອງໃຊ້:</u> ອີງຕາມກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນ ສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022

ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
PetroTrade
Kamphoengmuang Rd, Phonthan Village, Xaysettha District, Vientiane Capital, Lao P.D.R. Tel: 856 21 264834-5, Fax: 856021 264836

ເລກທີ: 0092/ປທລ/2023
ນະຄອນຫຼວງວຽງຈັນ, ວັນທີ: 07 ມິຖຸນາ 2023

ບົດບັນທຶກ ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022
ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ປທລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022 ເມື່ອ ວັນທີ 25 ພຶດສະພາ 2023 ເວລາ 09:30 ໂມງ ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ ກຳແພງ ເມືອງ ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມໃນຕອນເປີດ ງານທັງໝົດ 14 ທ່ານ ໃນນັ້ນ ຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງ ຈຳນວນ 7 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າ ຮ່ວມປະຊຸມແທນ ຈຳນວນ 7 ທ່ານ, ເຊິ່ງຖືຮຸ້ນລວມກັນທັງໝົດ 199.230.990 ຮຸ້ນ, ເທົ່າກັບ 84,77% ຂອງຈຳນວນຮຸ້ນ ທັງໝົດຂອງບໍລິສັດ. ໃນວາລະທີ 2 ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງມາເພີ່ມອີກຈຳນວນ 1 ທ່ານ, ດັ່ງນັ້ນ, ກອງປະຊຸມມີຜູ້ ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ 15 ທ່ານ ໃນນັ້ນ ຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງ ຈຳນວນ 8 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດ ໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ຈຳນວນ 7 ທ່ານ, ເຊິ່ງຖືຮຸ້ນລວມກັນທັງໝົດ 199.232.990 ຮຸ້ນ, ເທົ່າກັບ 84,77% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການຂອງບໍລິສັດ.

ພິທີກອນດຳເນີນກອງປະຊຸມ ໄດ້ແນະນຳສະມາຊິກສະພາບໍລິຫານແຕ່ລະທ່ານ ແລະ ເຈົ້າໜ້າທີ່ກ່ຽວຂ້ອງທີ່ໄດ້ ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

ສະມະຊິກສະພາບໍລິຫານ		ຕຳແໜ່ງ
1. ທ່ານ ຫວ່າງ ຮ້ຕະນະວົງສ໌	:	ປະທານສະພາບໍລິຫານ ອິດສະຫຼະ;
2. ທ່ານ ມາກ ລຸວັນ	:	ສະມາຊິກສະພາບໍລິຫານ;
3. ທ່ານ ນາງ ແສງເດືອນ ກົງວສຸວັດ	:	ສະມາຊິກສະພາບໍລິຫານ;
4. ທ່ານ ບຸນຖຶນ ວົງສຸລີ	:	ປະທານຄະນະກຳມະການກວດກາຄວາມສ່ຽງພາຍໃນ, ສະມາຊິກສະພາບໍລິຫານ ອິດສະຫຼະ;
5. ທ່ານ ສຈ ດາວອນ ຫວ່າງວິຈິດ	:	ປະທານຄະນະກຳມະການກວດສອບພາຍໃນ, ສະມາຊິກສະພາບໍລິຫານ ອິດສະຫຼະ.

ສ່ວນທ່ານ ຄຳສອນ ສິດທິໄຊ, ຮອງປະທານສະພາບໍລິຫານ ແລະ ທ່ານ ວຽງຄອນ ສິດທິໄຊ, ສະມາຊິກສະພາ ບໍລິຫານ ອິດສະຫຼະ ທັງສອງທ່ານບໍ່ສາມາດເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ເນື່ອງຈາກຕິດພາລະກິດ ແລະ ໄດ້ແຕ່ງຕັ້ງຕົວ ແທນ ເພື່ອເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ແທນ.

ໃນກອງປະຊຸມ, ຍັງມີທ່ານຜູ້ເຂົ້າຮ່ວມຕາງໜ້າຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ), ຕະຫຼາດຫຼັກຊັບລາວ (ຕລຊລ), ບໍລິສັດ PriceWaterhouseCooper (Lao) Sole Co., Ltd ແລະ ຜູ້ຖືຮຸ້ນລາຍຍ່ອຍ ໃຫ້ກຽດເຂົ້າຮ່ວມ.

ພິທີກອນໄດ້ແຈ້ງໃຫ້ບັນດາທ່ານຜູ້ຖືຮຸ້ນຮັບຊາບເຖິງວາລະການປະຊຸມໃນມື້ນີ້ ພ້ອມດ້ວຍວິທີການລົງຄະແນນ ແລະ ການນັບຜົນຄະແນນໃຫ້ທຸກທ່ານຮັບຊາບດັ່ງນີ້:

ວາລະການປະຊຸມ:

ວາລະ 1. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021;

ວາລະ 2. ພິຈາລະນາ ແລະ ຮັບຮອງ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2022 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2022;

ວາລະ 3. ພິຈາລະນາ ແລະ ຮັບຮອງການບໍ່ປັນຜົນຈາກຜົນການດຳເນີນທຸລະກິດປະຈຳປີ 2022 ເນື່ອງມາຈາກບໍລິສັດຍັງມີການຂາດທຶນສະສົມຢ່າງຕໍ່ເນື່ອງໃນຮອບປີຜ່ານມາ;

ວາລະ 4. ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2023;

ວາລະ 5. ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄົນ ບໍລິສັດ PriceWaterhouseCooper (Lao) Sole Co., Ltd ("PwC") ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2022 ຢູ່ລະຫວ່າງ 34.000 ຫາ 37.000 ໂດລາສະຫະລັດ.

❖ **ວິທີການລົງຄະແນນສຽງ:**

- ໜຶ່ງຮຸ້ນເທົ່າກັບໜຶ່ງສຽງ ແລະ ຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່;
- ໃນການລົງຄະແນນສຽງໃນແຕ່ລະວາລະກອງປະຊຸມ ປະທານຈະຖາມກອງປະຊຸມວ່າມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ;
    - ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍ ✓ ລົງໃນຊ່ອງ ☐ບໍ່ເຫັນດີ ໃນບັດລົງຄະແນນ ແລະ ຍົກບັດກາເຄື່ອງໝາຍນັ້ນຂຶ້ນສູງ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບເອົາບັດລົງຄະແນນ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດຖືວ່າຜູ້ຖືຮຸ້ນທ່ານນັ້ນມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ;
- ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສິດນັ້ນ ບໍລິສັດໄດ້ນຳເອົາການລົງຄະແນນສຽງ ຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສິດດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງໃນບັດລົງຄະແນນສຽງໃນກອງປະຊຸມອີກ.

❖ **ການນັບຜົນການລົງຄະແນນສຽງ:**

- ການນັບຜົນການລົງຄະແນນສຽງໃນແຕ່ລະວາລະຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຄະແນນສຽງຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ຍັນຫົ່ວໄວ້ລ່ວງໜ້າ ທີ່ອອກສຽງບໍ່ເຫັນດີມາລົບອອກຈາກ ຈຳນວນຮຸ້ນທັງໝົດ ຂອງຜູ້ທີ່ມາຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.
- ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມຮັບຊາບ ຫຼັງຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນຈຳນວນຈັກສ່ວນຮ້ອຍ, ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ຫຼັງຈາກປະທານໄດ້ປະກາດ ໃນກອງປະຊຸມຮັບ

ຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມານັບເປັນຄະແນນສຽງຕື່ມອີກ.

ກໍລະນີຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສິດມີຄຳຖາມ ຫຼື ຂໍ້ສະເໜີແນະໃດໆ ໃນແຕ່ລະວາລະລຶບກອນທ່ານກະລຸນາຍົກມືຂຶ້ນພ້ອມແຈ້ງຊື່, ນາມສະກຸນ ແລະ ສະຖານະວ່າເປັນຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສິດ ເພື່ອໃຊ້ປະກອບການບັນທຶກໃນບົດລາຍງານການປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022 ແລະ ອີກເທື່ອໜຶ່ງ, ໂດຍອີງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ, ຂ້າພະເຈົ້າຂໍອະນຸຍາດແຈ້ງໃຫ້ບັນດາທ່ານຊາບວ່າ: ໃນກອງປະຊຸມມື້ນີ້ບໍ່ອະນຸຍາດໃຫ້ຜູ້ສັງເກດການປະກອບຄຳເຫັນ ກ່ຽວກັບວາລະຂອງກອງປະຊຸມ.

ຫຼັງຈາກນັ້ນ ທ່ານ ຫວ່າງ ອັດທະນະວົງສ໌ ປະທານກອງປະຊຸມ, ເປັນຜູ້ກ່າວເປີດກອງປະຊຸມ ແລະ ດຳເນີນການປະຊຸມໃນແຕ່ລະວາລະ ໂດຍອີງຕາມວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022 ມີລາຍລະອຽດດັ່ງນີ້:

ວາລະທີ 1. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021

ທ່ານປະທານກອງປະຊຸມ ໄດ້ລາຍງານຕໍ່ທີ່ປະຊຸມ: ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ໄດ້ຈັດຂຶ້ນໃນວັນທີ 28 ເມສາ 2022 ໂດຍບໍລິສັດໄດ້ເຮັດບົດບັນທຶກຕາມເນື້ອໃນຂອງກອງປະຊຸມຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ.

ຫຼັງຈາກທ່ານປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 199.230.990 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 199.230.990 ສຽງ ຄິດເປັນ 100 %.

ວາລະທີ 2. ພິຈາລະນາ ແລະ ຮັບຮອງ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2022 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2022

ປະທານກອງປະຊຸມ ໄດ້ມອບໃຫ້ ທ່ານ ມາກ ລຸວັນ, ສະມາຊິກສະພາບໍລິຫານ ເປັນຜູ້ລາຍງານຕໍ່ກອງປະຊຸມ ກ່ຽວກັບຜົນການດຳເນີນທຸລະກິດຂອງ ບໍລິສັດ ປະຈຳປີ 2022 ເຊິ່ງມີລາຍລະອຽດດັ່ງນີ້:

I. ຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2022 ມີດັ່ງນີ້:

❖ ຕາຕະລາງຍອດຂາຍລູກຄ້າໂຄງການ:

1) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ແຜນປີ 2022 ກັບ ຍອດຂາຍຕົວຈິງ

ລູກຄ້າ	ແຜນ 2022	ຍອດຂາຍ	ສ່ວນຕ່າງ ຍອດຂາຍ 2022	
	ລິດ	ລິດ	ລິດ	ເປັນ %
B2B	**56.320.000**	**77.764.000**	**21.444.000**	**38,80%**

2) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ຍອດຂາຍປີ 2022 ກັບ ຍອດຂາຍປີ 2021

ລູກຄ້າ	ຍອດຂາຍ 2022	ຍອດຂາຍ 2021	ສ່ວນຕ່າງ ຍອດຂາຍ 2020-2021	
	ລິດ	ລິດ	ລິດ	ເປັນ %
B2B	**77.764.000**	**53.129.000**	**24.635.000**	**46,30%**

❖ ຕາຕະລາງຍອດຂາຍລູກຄ້າ Spot

ລູກຄ້າ	ແຜນ 2022	ຍອດຂາຍ	ສ່ວນຕ່າງ ຍອດຂາຍ 2022	
	ລິດ	ລິດ	ລິດ	ເປັນ %
SPOT	**75.000.000**	**73.002.000**	**(1.998.000)**	**-2,70%**

❖ ຕາຕະລາງຍອດຂາຍລູກຄ້ານ້ຳມັນ:

1) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ແຜນປີ 2022 ກັບ ຍອດຂາຍຕົວຈິງ

ລ/ດ	ລູກຄ້າ	ແຜນ	ຍອດຂາຍ	ສ່ວນຕ່າງ ແຜນ-ຍອດຂາຍ	
		ລິດ	ລິດ	ລິດ	ເປັນ %
1	ນ້ຳນ້ຳມັນພລາຕິນ້ຳ/Platinum	15.090.000	12.734.750	(3.152.250)	(15,61%)
2	ນ້ຳນ້ຳມັນໂກລ/Gold	26.495.000	29.647.250	2.355.250	11,90%
3	ນ້ຳນ້ຳມັນມາດຕະຖານ/Standard	27.046.000	30.224.000	3.178.000	11,75%
4	ນ້ຳນ້ຳມັນ ທ້ອງຖິ່ນພັດທະນາ/Thongthin	17.395.000	11.667.000	(5.728.000)	(32,93%)
ລວມ		**86.026.000**	**84.273.000**	**(1.753.000)**	**(2,04%)**

2) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ຍອດຂາຍປີ 2022 ກັບ ຍອດຂາຍປີ 2021

ລ/ດ	ລູກຄ້າ	ຍອດຂາຍ 2022	ຍອດຂາຍ 2021	ສ່ວນຕ່າງ ຍອດຂາຍ 2021-2022	
		ລິດ	ລິດ	ລິດ	ເປັນ %
1	ນ້ຳນ້ຳມັນພລາຕິນ້ຳ/Platinum	12.734.750	11.004.000	1.730.750	15,73%
2	ນ້ຳນ້ຳມັນ ໂກລ/Gold	29.647.250	21.295.500	8.351.750	39,22%

3	ປ໊ານ້ຳມັນມາດຕະຖານ/Standard	30.224.000	23.146.245	7.077.755	30,58%
4	ປ໊ານ້ຳມັນ ທ້ອງຖິ່ນພັດທະນາ/Thongthin	11.667.000	13.161.000	(1.494.000)	(11,35%)
ລວມ		**84.273.000**	**68.606.745**	**15.666.255**	**22,83%**

❖ **ຕາຕະລາງຍອດຂາຍນ້ຳມັນເຕົາ, ຢາງໝາກຕອຍ ແລະ ນ້ຳມັນເຄື່ອງ**

1) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ແຜນປີ 2022 ກັບ ຍອດຂາຍຕົວຈິງ

ລ/ດ	ລູກຄ້າ	ແຜນ 2022	ຍອດຂາຍ 2022	ສ່ວນຕ່າງ ແຜນ-ຍອດຂາຍ 2022	
		ເປັນ ລິດ	ເປັນ ລິດ	ເປັນ ລິດ	ເປັນ %
1	ລູກຄ້ານ້ຳມັນເຕົາ				
2	ຢາງໝາກຕອຍ				
3	ນ້ຳມັນເຄື່ອງ	250.000	9.070	(240.93)	(96,37%)
ລວມ		250.000	9.070	(240.93)	(96,37%)

2) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ຍອດຂາຍປີ 2022 ກັບ ຍອດຂາຍປີ 2021

ລ/ດ	ລູກຄ້າ	ຍອດຂາຍ 2022	ຍອດຂາຍ 2021	ສ່ວນຕ່າງ ຍອດຂາຍ 2021-2022	
		ເປັນ ລິດ	ເປັນ ລິດ	ເປັນ ລິດ	ເປັນ %
1	ລູກຄ້ານ້ຳມັນເຕົາ		60.000		-100%
2	ຢາງໝາກຕອຍ				
3	ນ້ຳມັນເຄື່ອງ	9.070	26.142	-17.072	(65,3%)
ລວມ		**9.070**	**86.142**	**-77.072**	**(65,3%)**

❖ **ຕາຕະລາງຍອດຂາຍລູກຄ້າທັງໝົດ**

1) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ແຜນປີ 2022 ກັບ ຍອດຂາຍປີ 2022

ລ/ດ	ລູກຄ້າ	ແຜນ 2022	ຍອດຂາຍ 2022	ສ່ວນຕ່າງ ແຜນ-ຍອດຂາຍ 2022	
		ເປັນ ລິດ	ເປັນ ລິດ	ເປັນ ລິດ	ເປັນ %
1	ລູກຄ້າໃຄງການ/B2B	56.320.000	77.764.000	21.444.000	38,08%
2	ລູກຄ້າປ໊ານ້ຳມັນ/Gas Station	86.026.000	84.273.000	(1.753.000)	(2,04%)
3	ລູກຄ້ານ້ຳມັນເຕົາ ແລະ ຢາງໝາກຕອຍ	0	0	0	0
4	ລູກຄ້ານ້ຳມັນເຄື່ອງ/Lubricant	250.000	9.070	-17.072	(65,3%)
5	SPOT	75.000.000	73.002.000	(1.998.000)	(2,66%)
ລວມ		**217.596.000**	**235.048.070**	**17.452.070**	**8,02%**

2) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ຍອດຂາຍ 2022 ກັບ ຍອດຂາຍ 2021

ລ/ດ	ລູກຄ້າ	ຍອດຂາຍ 2022	ຍອດຂາຍ 2021	ສ່ວນຕ່າງ ຍອດຂາຍ 2021-2022	
		ເປັນ ລິດ	ເປັນ ລິດ	ເປັນ ລິດ	ເປັນ %
1	ລູກຄ້າໂຄງການ/B2B	77.764.000	53.129.000	24.635.000	46,37%
2	ລູກຄ້າປ້ຳນ້ຳມັນ/Gas Station	84.273.000	68.606.745	15.666.255	22,83%
3	ລູກຄ້ານ້ຳມັນເຕົາ ແລະ ຢາງໝາກຕອຍ	0	60.000	-60.000	-100%
4	ລູກຄ້ານ້ຳມັນເຄື່ອງ/Lubricant	9.070	26.142	-17.072	(65,3%)
5	SPOT	73.002.000	75.109.000	(2.107.000)	(2,88%)
	ລວມ/Total	**235.048.070**	**196.930.887**	**38.11718**	**19,36%**

❖ **ສູນລວມດ້ານບໍລິການ (Shared Service Centers)**

ໃນແຜນການດຳເນີນທຸລະກິດ ປີ 2022, ປທລ ໄດ້ສ້າງສູນລວມດ້ານບໍລິການຂຶ້ນ ເພື່ອຈຸດປະສົງ ດັ່ງລຸ່ມນີ້:

- ເພື່ອຄວາມຄ່ອງຕົວ ແລະ ລວມສູນ;
- ເພື່ອສ້າງລາຍໄດ້ເພີ່ມໃຫ້ ປທລ;
- ເພື່ອໃຫ້ມີການຄວບຄຸມທີ່ດີຂຶ້ນ ແລະ ມີຄວາມໂປ່ງໃສກ່ຽວກັບຄ່າໃຊ້ຈ່າຍຂອງບໍລິສັດໃນເຄືອທັງໝົດ.

ລ/ດ	ລາຍການ	ປີ 2022	ໄດ້ຮັບຕົວຈິງ	ເປັນ %
1	ຄ່າບໍລິການໄອທີ	595.636,00	1.278.510,00	115%
2	ບໍລິຫານຫ້ອງການ	214.875,03	245.368,00	14%
	ລວມ	**810.511,03**	**1.523.878.00**	**129%**

ຕາຕະຕາງປຽບທຽບລາຍຮັບລະຫວ່າງ ປີ 2022 ແລະ ປີ 2021

ລ/ດ	ລາຍການ	ປີ 2022	ປີ 2021	ເປັນ %
1	ຄ່າບໍລິການໄອທີ	1.278.510,00	227.568,00	462%
2	ບໍລິຫານຫ້ອງການ	245.368,00	272.496,00	-10%
	ລວມ	**1.523.878,00**	**500.064,00**	**452%**

❖ **ການບໍລິຫານສາງນ້ຳມັນ ໃນປີ 2022**

1. ການຮັບເຂົ້າ ແລະ ການຈ່າຍອອກສາງນ້ຳມັນທັງໝົດ

ລ/ດ	ລາຍການ	2021	2022	ສ່ວນຕ່າງ 2021-2022	
		ເປັນ ລິດ	ເປັນ ລິດ	ເປັນ ລິດ	ເປັນ %
1	ການຮັບເຂົ້າສາງທັງໝົດ	122.152.233	164.101.797	41.949.564	34,34%
2	ການຈ່າຍອອກສາງທັງໝົດ	123.504.480	163.212.423	39.707.943	32,15%

3	ນ້ຳມັນເຄື່ອງ	30.206	0	0	-100%
ລວມ		245.686.919	327.314.220	81.657.507	33,22%

2 ຄ່າສະເລ່ຍອາຍລະເຫີຍ ຂອງ ນ້ຳມັນ ແຕ່ລະຊະນິດ

- ຄ່າສະເລ່ຍອາຍລະເຫີຍ ຂອງ ນ້ຳມັນແອກຊັ່ງ 95 ໃນລະຫວ່າງເກັບຮັກສາເທົ່າກັບ -1.515ລິດ ຂອງຍອດຮັບທັງໝົດ 985.057 ລິດ ຢູ່ໃນເກນມາດຕະຖານໃນອັດຕາສະເລ່ຍ -0,16 ສ່ວນຮ້ອຍ;
- ຄ່າສະເລ່ຍອາຍລະເຫີຍ ຂອງ ນ້ຳມັນແອກຊັ່ງ 91 ໃນລະຫວ່າງເກັບຮັກສາເທົ່າກັບ -43.624 ລິດ ຂອງຍອດຮັບທັງໝົດ 33.091.026 ລິດ ຢູ່ໃນເກນມາດຕະຖານໃນອັດຕາສະເລ່ຍ -0,13 ສ່ວນຮ້ອຍ;
- ຄ່າສະເລ່ຍອາຍລະເຫີຍ ຂອງ ນ້ຳມັນກາຊວນ ໃນລະຫວ່າງເກັບຮັກສາເທົ່າກັບ -78.831 ລິດ ຂອງຍອດຮັບທັງໝົດ 130.025.714 ລິດ ຢູ່ໃນເກນມາດຕະຖານໃນອັດຕາສະເລ່ຍ -0,06 ສ່ວນຮ້ອຍ.

❖ **ບຸກຄະລາກອນ**

ບໍລິສັດ ປິໂຕຣລ້ຽມ ເທຣດດິ້ງລາວ ມະຫາຊົນ ມີພະນັກງານທັງໝົດຈຳນວນ 156 ຄົນ, ໃນນັ້ນມີເພດຍິງຈຳນວນ 91 ຄົນ.

ການດຳເນີນງານດ້ານບຸກຄະລາກອນ ປະຈຳປີ 2022 ຜ່ານມາແມ່ນເນັ້ນໃສ່ການຮັບປະກັນຄວາມພຽງພໍ ຂອງພະນັກງານ, ການສັນຫາບຸກຄະລາກອນທີ່ເໝາະສົມເຂົ້າດຳແໜ່ງທີ່ຫວ່າງຢ່າງມີປະສິດທິພາບ, ເບິ່ງແຍງສະຫວັດດີການຂອງພະນັກງານຕາມກົດລະບຽບພາຍໃນບໍລິສັດ ແລະ ຕາມກົດໝາຍແຮງງານລາວອອກ.

ນອກນີ້ກໍຍັງໄດ້ຈັດໃຫ້ມີການຝຶກອົບຮົມໃນຫົວຂໍ້ຕ່າງໆ ເພື່ອເພີ່ມທັກສະ ແລະ ຄວາມຮັບຮູ້ຂອງພະນັກງານພາຍໃນອົງກອນດັ່ງນີ້:

- ການເຜີຍແຜ່ນະໂຍບາຍບໍລິສັດ, ມາດຕະຖານ ISO ແລະ ກົດໝາຍປະຈຳສົກປີ 2022;
- ເຜີຍແຜ່ກົດລະບຽບ ແລະ ນະໂຍບາຍບໍລິສັດ (ສຳລັບພະນັກງານເຂົ້າໃໝ່);
- ເຜີຍແຜ່ລະບຽບຄວາມປອດໄພ ແລະ ສິ່ງແວດລ້ອມ;
- ຝຶກອົບຮົມລະບົບບັນຊີມາດຕະຖານໃໝ່ (IFRS);
- ຝຶກອົບຮົມການຮັບຮູ້ປອດໄພ;
- ຝຶກອົບຮົມການແຈ້ງພາສີອາກອນທົ່ວໄປ;
- ການນຳໃຊ້ໂປຣແກຣມບັນຊີ Microsoft Dynamic AX;
- ຝຶກອົບຮົມການການນຳໃຊ້ຊັອຟແວ MS Excel ຂັ້ນ Intermediate;
- ຝຶກອົບຮົມການດັບໄຟ;
- ເຜີຍແຜ່ຂອບເຂດສິດອຳນາດໃນການອະນຸມັດເອກະສານພາຍໃນ.

❖ ຄວາມຮັບຜິດຊອບຕໍ່ສັງຄົມຂອງບໍລິສັດ

ເນື້ອໃນ	ຈຳນວນເງິນເປັນກີບ
ລວມ ຮຸກຍຸ້ຄ່ານ້ຳມັນລົດ ກຸ່ໄພ	62.576.900
ເບີກເງິນຈ່າຍຄ່າຊ່ວຍເຫລືອແຂວງລາລະວັນທີ່ໄດ້ຮັບຜົນກະທົບໄພພິບັດທຳມະຊາດ (ອີງຕາມໃບສະເໜີເລກທີ 1	8.000.000
ເບີກເງິນຈ່າຍຄ່າອຸປະຖຳເງິນປະມານເພື່ອຮັບໃຊ້ຂະບວນການສະເຫຼີມສະຫຼອງວັນແມ່ຍິງສາກົນ ວັນທີ 08 ມີນາ 2022	5.000.000
ເບີກເງິນສະໜັບສະໜຸນນັກກິລາ U19 ຊາຍ	25.000.000
ເບີກເງິນຄ່າຮຸກຍຸ້ສະມາຄົມ ແລະ ອາຍແກ້ດລາວ	50.000.000
ເບີກຈ່າຍຄ່າ ສະໜັບສະໜຸນງານເດີນແບບການກຸສົນ(ເພື່ອສົ່ງອ້ອມກອດໜ່ວງໃຍໄປເຖິງລຸກຫຼານຢູ່ຂອບຟ້າແດນ	100.000.000
ເບີກເງິນສະໜັບສະໜຸນງານມະຫາກິລາແຫ່ງຊາດຄັ້ງທີ XI ທີ່ແຂວງຊຽງຂວາງ ອີງຕາມຄວາມເຫັນດີຂອງ ທ່ານ ຄຳ	20.000.000
ເບີກຈ່າຍຄ່າສະໜັບສະໜຸນງານແລ່ນການກຸສົນ KASEM RUN ໃນຄັ້ງວັນທີ 05/11/2022	50.000.000
ເບີກເງິນຈ່າຍຄ່າອຸປະຖຳເງິນປະມານເພື່ອຮັບໃຊ້ຂະບວນການສະເຫຼີມສະຫຼອງວັນແມ່ຍິງສາກົນ ວັນທີ 08 ມີນາ 2022	5.000.000
ເບີກເງິນປະກອບສ່ວນຈັດງານມອບໃບຮັບໃບປະກາດສະນິຍະບັດ ໃຫ້ສະມາຊິກນັກບັນຊີ	1.600.000
ເບີກເງິນຄ່າອຸປະຖຳການສະໜັບສະໜຸນນັກກິລາ Esport ສະໄໝສອນ Paradise sport ສູ່ການແຂ່ງຂັນຊີເກມຄັ້ງທີ 31ທີ່ສສ ຫວຽດນ	75.025.000
ລວມ	**402.201.900**

❖ ການມອບພັນທະອາກອນ ແລະ ອື່ນໆ ເຂົ້າລັດ ປະຈຳປີ 2022

ປະເພດອາກອນ	ປີ 2021	ປີ 2022
ພາສີນຳເຂົ້າ	84.433.127.700	204.387.894.555
ອກຊ	268.779.530.700	214.463.864.169
ອມພ	143.983.943.199	243.242.799.714
ບຸລະມະທາ	107.570.320.000	123.195.666.360
ຄ້ຳແຮ	109.298.940.000	86.953.600.000
ອິນດາຕີ	261.876.000	
ຄຸນນະພາບ	2.764.776.000	3.703.790.000
ໃບແຈ້ງພາສີ	130.714.999	181.957.300
ອມພ ຈ່າຍເພີ່ມ ປະຈຳເດືອນ	26.804.172.170	24.156.455.500
ອາກອນກຳໄລ	52.884.234	-

ອາກອນເງິນເດືອນ	441.733.970	456.209.631
ລວມ:	**744.522.018.973**	**900.742.237.229**

II. ເອກະສານລາຍງານການເງິນ ປະຈຳປີ 2022 ສາມາດສະຫຼຸບຕົວເລກໄດ້ດັ່ງນີ້:

ຫົວໜ່ວຍ: ກີບ

ລາຍການ	2022	2021
ຊັບສິນທັງໝົດ	1.891.034.517.557	931.260.589.103
ໜີ້ສິນທັງໝົດ	1.329.154.704.697	799.614.950.893
ສ່ວນຂອງຜູ້ຖືຮຸ້ນ	561.879.812.858	131.645.638.210
ລາຍຮັບທັງໝົດ	3.823.145.537.169	1.629.626.447.217
ກຳໄລ/(ຂາດທຶນ) ສຸດທິ	45.523.073.182	(78.500.509.737)
ກຳໄລສຸດທິຕໍ່ຮຸ້ນ	192	(333)

ລາຍລະອຽດ ເອກະສານລາຍງານການເງິນ ປະຈຳປີ 2022 **(ເອກະສານຄັດຕິດ 3)**

ຫຼັງຈາກທ່ານ ມາກ ລຸວັນ, ສະມາຊິກສະພາບໍລິຫານ ໄດ້ລາຍງານໂຄຍຫຍໍ້ໃນວາລະນີ້ແລ້ວ ກໍໄດ້ມອບເວທີຄືນ ໃຫ້ ປະທານກອງປະຊຸມ ແລະ ທ່ານກໍໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້, ເຊິ່ງມີຄຳຖາມ, ຂໍ້ສະເໜີ ແລະ ການຊີ້ແຈງດັ່ງນີ້:

- **ຄຳເຫັນ ແລະ ຂໍ້ສະເໜີ ຈາກ ທ່ານ ໄກວັນ ກາດາວານິດ (Mr. Kraiwal KADAVANICH), ຜູ້ຖືຮຸ້ນມາດ້ວຍຕົນເອງ:**

  1) ໃນວາລະທີ 2 ກ່ຽວກັບຜົນການດຳເນີນທຸລະກິດຂອງບໍລິສັດ ໃນຫົວຂໍ້ທີ່ຕິດພັນກັບການບໍລິຫານບຸກຄະລາກອນ ໃນນັ້ນຈະມີເລື່ອງຂອງການປະຕິບັດງານເພື່ອໃຫ້ສອດຄ່ອງຕາມລະບຽບການ (Compliance) ເຫັນວ່າເອກະສານໜັງສືແຈ້ງເຊີນເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ຄວນຈະມີເລກໜ້າ ເພາະເວລາທີ່ຜູ້ຖືຮຸ້ນມີຄຳຖາມ ກໍສາມາດລະບຸເລກໜ້າໃຫ້ກັບທ່ານປະທານ ເພື່ອເປີດເອກະສານໄປພ້ອມກັນໄດ້ຢ່າງຖືກຕ້ອງ; ນອກຈາກນັ້ນ, ກໍລະນີມີການປ່ຽນແປງຂໍ້ມູນບາງຢ່າງ ແທນຂໍ້ມູນເກົ່າ ຄວນລະບຸໃຫ້ຊັດເຈນວ່າປ່ຽນແປງຢູ່ຈຸດໃດ ແລະ ຄັ້ງທີເທົ່າໃດ ເພື່ອບໍ່ໃຫ້ເກີດການສັບສົນ ແລະ ໃຫ້ຮູ້ວ່າເອກະສານໃດເປັນສະບັບລ່າສຸດ. ດັ່ງນັ້ນ, ຂໍສະເໜີໄປຍັງຄະນະທີ່ຮັບຜິດຊອບຈັດກຽມເອກະສານ ກວດຄືນຕື່ມໃນຈຸດດັ່ງກ່າວດ້ວຍ;

  2) ບໍລິສັດ ໄດ້ເລື່ອນວັນທີຈັດກອງປະຊຸມເຖິງສອງຄັ້ງ ແລະ ຄັ້ງນີ້ເປັນຄັ້ງທີສາມ ທີ່ສາມາດຈັດປະຊຸມໄດ້; ໃນນັ້ນ, ການປະຊາສຳພັນ ຫຼື ແຈ້ງໃຫ້ຜູ້ຖືຮຸ້ນຮັບຊາບກ່ຽວກັບການເລື່ອນ ເຫັນວ່າມີການແຈ້ງລ່ວງໜ້າກ່ອນມື້ປະຊຸມພຽງວັນດຽວໃນແຕ່ລະຄັ້ງທີ່ມີການແຈ້ງເລື່ອນ ແລະ ການເຂົ້າຮ່ວມກອງປະຊຸມຂອງຜູ້ຖືຮຸ້ນບາງລາຍ ອາດຕ້ອງມີຄ່າໃຊ້ຈ່າຍ ເພື່ອກຽມຕົວເດີນທາງໃນແຕ່ລະຄັ້ງ. ນອກຈາກນັ້ນ, ເຫດຜົນຂອງການເລື່ອນກອງປະຊຸມທີ່ເປີດເຜີຍອອກໄປ ຄວນລະບຸເຫດຜົນໃຫ້ຂະຫຍາຍຄວາມກວ່ານັ້ນ ໂດຍທີ່ບໍ່ກະທົບຝ່າຍໃດຝ່າຍໜຶ່ງ ແລະ ຄວນໃຫ້ຝ່າຍກົດໝາຍເຂົ້າມາກວດກາບັນດາເອກະສານ ກ່ອນທີ່ຈະເປີດເຜີຍສູ່ມວນຊົນ. ດັ່ງນັ້ນ, ຂໍສະເໜີໃຫ້ບໍລິສັດ ແລະ ຄະນະທີ່ຮັບຜິດຊອບຈັດກຽມເອກະສານ ພິຈາລະນາຕໍ່ກັບຄຳເຫັນດັ່ງກ່າວນີ້;

3) ຜູ້ສັງເກດການທີ່ເຂົ້າຮ່ວມກອງປະຊຸມ ຄວນໃຫ້ສາມາດມີສິດປະກອບຄຳເຫັນ ແລະ ຖາມຄຳຖາມໄດ້ ໃນ ກໍລະນີທີ່ເຫັນວ່າກອງປະຊຸມມີບາງຢ່າງບໍ່ສອດຄ່ອງຕາມລະບຽບ ພຽງແຕ່ບໍ່ມີສິດໃນການລົງຄະແນນສຽງ ເທົ່ານັ້ນ ສະເໜີໃຫ້ພິຈາລະນາແກ້ໄຂຈຸດດັ່ງກ່າວດ້ວຍ.

❖ **ຄຳເຫັນ ແລະ ຂໍ້ສະເໜີ ຈາກຕາງໜ້າຜູ້ກວດສອບບັນຊີພາຍນອກ PriceWaterhouseCooper (PwC):** ເອກະສານລາຍງານການເງິນຂອງ ປທລ ໃນປີນີ້ ມີກຳໄລຂ້ອນຂ້າງດີ ເຊິ່ງໃນນັ້ນ, ມີບາງປະເດັນໂດຍສະເພາະ ແມ່ນເລື່ອງລາຍຈ່າຍອາກອນ ທີ່ຕ້ອງໄດ້ຕີຄວາມໝາຍໃສ່ຫຼັກການ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ ເຊິ່ງ ທາງຜູ້ກວດສອບ ແລະ ຜູ້ບໍລິຫານ ກໍ່ໄດ້ມີການປຶກສາຫາຫາລືກັນ ເພື່ອຂໍຄຳເຫັນຈາກທາງເຈົ້າໜ້າທີ່ສ່ວຍສາ ອາກອນ ທັງນີ້ຕໍ່ກັບປະເດັນດັ່ງກ່າວ ກໍ່ເພື່ອເປັນການສ້າງຜົນປະໂຫຍດສູງສຸດໃຫ້ແກ່ບໍລິສັດ; ເຖິງຢ່າງໃດກໍ່ ຕາມ, ການຜິວພັນປະສານງານກັນຂອງແຕ່ລະຝ່າຍ ອາດຈະໃຊ້ເວລາພໍສົມຄວນ ເຮັດໃຫ້ກຳນົດການຕ່າງໆຖືກ ເລື່ອນອອກໄປ ແລະ ເຫັນວ່າການເລື່ອນກອງປະຊຸມຄວນແຈ້ງກ່ອນລ່ວງໜ້າ ເພື່ອໃຫ້ຜູ້ຖືຮຸ້ນໄດ້ມີເວລາກຽມ ຕົວ ແລະ ກໍລະນີຜູ້ຖືຮຸ້ນທີ່ໄດ້ຮັບຜົນກະທົບ ກໍ່ຄວນໄດ້ຮັບການຊົດເຊີຍ ຂໍ້ສະເໜີໄປຍັງຜູ້ບໍລິຫານ ເພື່ອ ພິຈາລະນາ.

→ **ທ່ານ ຫວ່າງ ຣັຕະນະວົງສ໌, ປະທານສະພາບໍລິຫານ ອິດສະຫຼະ:** ສະແດງຄວາມຂອບໃຈຢັ່ນດາທ່ານ ທີ່ປະກອບ ຄຳເຫັນ ແລະ ຂໍ້ສະເໜີສິ່ງຂ່າວ ເຊິ່ງເຫັນໄດ້ວ່າເປັນຂໍ້ສະເໜີ ແລະ ຂໍ້ສັງເກດທີ່ເປັນປະໂຫຍດ ທາງບໍລິສັດ ປທລ ຍັນດີຮັບເອົາຄຳເຫັນດັ່ງກ່າວ ເພື່ອນຳໄປປັບປຸງໃຫ້ດີຂຶ້ນ ແລະ ມອບໃຫ້ ທ່ານ ຄຳພຸດ ສົມບຸນ ຊີ້ແຈງ ໃຫ້ຜູ້ຖືຮຸ້ນຮັບຊາບ ຕໍ່ກັບຄຳຖາມ ແລະ ຂໍ້ສະເໜີສະເພາະທີ່ຕິດພັນກັບການປະຕິບັດງານເພື່ອໃຫ້ສອດຄ່ອງ ຕາມລະບຽບການ (Compliance).

→ **ທ່ານ ຄຳພຸດ ສົມບຸນ, ຕາງໜ້າສະພາບໍລິຫານ ແລະ ຄະນະຮັບຜິດຊອບຈັດກຽມເອກະສານ:** ຂໍຂອບໃຈທ່ານ ທີ່ໃຫ້ຂໍ້ມູນ ແລະ ປະກອບຄຳເຫັນ ໃນສ່ວນຂອງການຈັດກຽມເອກະສານໜັງແຈ້ງເຊີນ ແລະ ເອກະສານຄັດ ຕິດ ທີ່ບໍ່ໄດ້ລະບຸເລກໜ້າໃສ່ ທາງເຮົາຈະແຈ້ງຜູ້ຮັບຜິດຊອບຈັດກຽມເອກະສານ ປັບປຸງຕາມການສະເໜີ ດັ່ງກ່າວ. ສ່ວນເຫດຜົນທີ່ໄດ້ລະບຸໃສ່ໃນການເລື່ອນກອງປະຊຸມທັງສອງຄັ້ງ ເຫັນວ່າເປັນການກະທົບຝ່າຍໃດ ຝ່າຍໜຶ່ງ ໂດຍອາດເປັນການບໍ່ຕັ້ງໃຈ ເຊິ່ງທາງບໍລິສັດ ປທລ ຈະນຳເອົາຄຳແນະນຳດັ່ງກ່າວມາປັບປຸງ ກໍລະນີ ເກີດເຫດການດັ່ງກ່າວຂຶ້ນອີກ ທາງເຮົາຈະໄດ້ມີການຮ່ວມມື ແລະ ປຶກສາຫາຫາລືກັນກັບອີກຝ່າຍ ເພື່ອເຮັດໃຫ້ ເອກະສານທີ່ເປີດເຜີຍອອກໄປຖືກຕ້ອງ ແລະ ເໝາະສົມ. ນອກຈາກນັ້ນ, ຄຳແນະນຳອື່ນໆ ທາງບໍລິສັດຈະນຳ ມາພິຈາລະນາຢ່າງຖີ່ຖ້ວນ.

ຈາກນັ້ນປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາບົດລາຍງານຜົນການດຳ ເນີນທຸລະກິດ ປະຈຳປີ 2022 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳ ປີ 2022.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2022 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2022 ດ້ວຍ ຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້:

- ເຫັນດີ 199.232.990 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 199.232.990 ສຽງ ຄິດເປັນ 100 %.

ວາລະທີ 3. ພິຈາລະນາ ແລະ ຮັບຮອງການບໍ່ປັນຜົນຈາກຜົນການດຳເນີນທຸລະກິດປະຈຳປີ 2022 ເນື່ອງມາຈາກບໍລິສັດຍັງມີການຂາດທຶນສະສົມຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ

ທ່ານປະທານກອງປະຊຸມ ໄດ້ລາຍງານຕໍ່ທີ່ປະຊຸມ: ອີງຕາມເອກະສານລາຍງານການເງິນທີ່ຜ່ານການກວດສອບພາຍນອກ ປະຈຳປີ 2022, ບໍລິສັດມີກຳໄລສຸດທິ 45.523.073.182 ກີບ ແລະ ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ ລົງວັນທີ 26 ທັນວາ 2013, ມາດຕາ 155 "ການແບ່ງເງິນປັນຜົນ" ຫ້າມບໍ່ໃຫ້ບໍລິສັດຈ່າຍເງິນປັນຜົນ ເມື່ອບໍລິສັດຍັງມີການຂາດທຶນສະສົມຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ.

ດັ່ງນັ້ນ, ສະພາບໍລິຫານ ຈຶ່ງເຫັນດີຮັບຮອງການບໍ່ປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2022 ເນື່ອງມາຈາກບໍລິສັດຍັງມີການຂາດທຶນສະສົມຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ ແລະ ສະເໜີນຳກຳໄລສຸດທິປະຈຳປີ 2022 ເຂົ້າຂາດທຶນສະສົມ.

ຫຼັງຈາກທ່ານປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການບໍ່ປັນຜົນຈາກຜົນການດຳເນີນທຸລະກິດປະຈຳປີ 2022 ເນື່ອງມາຈາກບໍລິສັດຍັງມີການຂາດທຶນສະສົມຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງການບໍ່ປັນຜົນຈາກຜົນການດຳເນີນທຸລະກິດປະຈຳປີ 2022 ເນື່ອງມາຈາກບໍລິສັດຍັງມີການຂາດທຶນສະສົມຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 199.232.990 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 199.232.990 ສຽງ ຄິດເປັນ 100 %.

ວາລະທີ 4. ພິຈາລະນາ ແລະ ຮັບຮອງເອົາແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2023

ທ່ານ ປະທານກອງປະຊຸມ ໄດ້ມອບເວທີໃຫ້ ທ່ານ ມາກ ລຸວັນ, ສະມາຊິກສະພາບໍລິຫານ ຂອງ ປທລ ລາຍງານຕໍ່ກອງປະຊຸມກ່ຽວກັບແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2023 ມີດັ່ງນີ້:

ໃນປີ 2023 ຈະເປັນປີທີ່ມີຄວາມທ້າທາຍຄັ້ງໃຫຍ່ ສຳລັບບໍລິສັດ ເນື່ອງຈາກພວກເຮົາຈະຕ້ອງໄດ້ປັບປຸງລະບົບການບໍລິຫານຈັດການ ຈາກການດຳເນີນທຸລະກິດທີ່ຂາດທຶນສະສົມໃນປີ 2022 ແລະ ຈຳເປັນຕ້ອງໄດ້ມີການຊຶດເຊີຍຈຳນວນຍອດຂາຍທີ່ຫາຍໄປຈາກລູກຄ້າໂຄງການທີ່ການກໍ່ສ້າງໄດ້ສຳເລັດໄປແລ້ວ, ດັ່ງນັ້ນ, ບໍລິສັດຈຶ່ງຕັດສິນໃຈນຳໃຊ້ຍຸດທະສາດທາງການຕະຫຼາດເຊິ່ງລຸກ ແລະ ມີຄວາມເໝາະສົມຫຼາຍຂຶ້ນ ລວມທັງຍຸດທະສາດທາງການຕະຫຼາດພາຍໃນປະເທດອີກດ້ວຍ.

1. ການຂະຫຍາຍຕົວ - ຊຶດເຊີຍຄວາມເສຍຫາຍໃນປີ 2022

A. ໂຄງການ B2B

- ເພີ່ມປະລິມານການສະໜອງນ້ຳມັນໃຫ້ຫຼາຍຂຶ້ນ ໂດຍໃຊ້ປະໂຫຍດຈາກຄວາມໄດ້ປຽບດ້ານລຸປະຫານ ແລະ ໂລຈິສຕິກຂອງບໍລິສັດ (ທຽບກັບຜູ້ນຳເຂົ້າລາຍອື່ນ) ພ້ອມກັບການປະຕິບັດຕາມກົດລະບຽບຂອງລັດຖະບານ;
- ເພີ່ມຖານລູກຄ້າໃນຮູບແບບ B2B ໃຫ້ຫຼາຍຂຶ້ນ (ໂດຍສະເພາະແມ່ນ ກຸ່ມລູກຄ້າຂຸດຄົ້ນບໍ່ແຮ່ ແລະ ຂາຍສົ່ງ);
- ໃຊ້ປະໂຫຍດຈາກການຊື້ນ້ຳມັນດ້ວຍລາຄາອ້າງອີງໃນປະຈຸບັນ ແລະ ລາຄາທີ່ຫຼາກຫຼາຍໃຫ້ໄດ້ປະມານ 45 ລ້ານລິດ.

B. ການຂາຍຍ່ອຍ

- ເພີ່ມປະລິມານການສະໜອງນ້ຳມັນໃຫ້ກັບລູກຄ້າປະຈຸບັນໃຫ້ຫຼາຍຂຶ້ນ ແລະ ລູກຄ້າ COCO ລາຍໃໝ່ທີ່ຫາມາໄດ້.
- ປັບປຸງພາຍລັກ ແລະ ເພີ່ມມູນຄ່າໃຫ້ກັບທຸລະກິດນ້ຳມັນ ແລະ ທຸລະກິດຮ້ານສະດວກຊື້ໃນປ້ຳນ້ຳມັນ ເພື່ອໃຫ້ມີກຳໄລ ແລະ ປະລິມານການຂາຍເພີ່ມຂຶ້ນ:
  - ສົ່ງເສີມໃຫ້ລູກຄ້ານຳໃຊ້ການເຕີມນ້ຳມັນດ້ວຍບັດ (ບັດ PlusCard)
  - ພັດທະນາລະບົບການຈຳໜ່າຍນ້ຳມັນເຄື່ອງໃຫ້ໄດ້ (10)
  - ພັດທະນາຮ້ານກາເຟ (9)

C. ການຕະຫຼາດ ແລະ ການສົ່ງເສີມການຂາຍ

- ເພີ່ມກຳໄລໃຫ້ຫຼາຍຂຶ້ນ ໂດຍການຫຼຸດຕົ້ນທຶນ.
- ສືບຕໍ່ຕິດຕາມ ແລະ ຮ່ວມມືກັບຄັ່ງບໍລິສັດອຸດສາຫະກຳ ເພື່ອຮັກສາສ່ວນແບ່ງທາງການຕະຫຼາດ/ຫຼຸດຄ່າໃຊ້ຈ່າຍດ້ານຕົ້ນທຶນ, ປະກັນໄພ ແລະ ການຂົນສົ່ງສິນຄ້າ.

2. ປະສິດທິພາບທາງດ້ານການດຳເນີນງານ

i) ສືບຕໍ່ ບໍລິຫານຈັດການຄ່າໃຊ້ຈ່າຍດ້ານການດຳເນີນງານ ແລະ ຄ່າໃຊ້ຈ່າຍດ້ານການລົງທຶນໃຫ້ມີປະສິດທິພາບ ໂດຍການຕັດປັບໂຄງສ້າງ ແລະ ການລົງທຶນຂອງບໍລິສັດ ໃຫ້ໄດ້ຜົນຕອບແທນໄວ້ທີ່ສຸດ.

ii) ປັບປຸງປະສິດທິພາບໃນການດຳເນີນງານຄືນໃໝ່, ຂະຫຍາຍສາງນ້ຳມັນໃຫ້ສາມາດຮັບຈຸປະລິມານນ້ຳມັນໄດ້ຫຼາຍຂຶ້ນ ແລະ ນຳໃຊ້ໃຫ້ເກີດປະໂຫຍດສູງສຸດ ເພື່ອຫຼຸດຜ່ອນການລົງທຶນໃນການຂະຫຍາຍສາງນ້ຳມັນ.

3. ນະໂຍບາຍທາງດ້ານການເງິນ

i) ຫຼຸດອັດຕາສ່ວນລູກໜີ້ການຄ້າຂອງບໍລິສັດໃນປີ 2022 ໃຫ້ເຫຼືອ 0

ii) ຫຼຸດຜ່ອນຄວາມສ່ຽງສິນເຊື່ອເປີກເກັບບັນຊີຂອງບໍລິສັດ ກັບບັນດາພຸ້ສະໜອງ.

iii) ບໍລິຫານ ຄວາມສ່ຽງດ້ານສິນເຊື່ອຂອງລາຄານ້ຳມັນອ້າງອີງໃນປະຈຸບັນ.

iv) ຫຼຸດຄວາມສ່ຽງ ການຂາດທຶນຈາກອັດຕາແລກປ່ຽນ ໃຫ້ເຫຼືອ 0.

4. ວັດທະນະທຳອົງກອນ

i) ສົ່ງເສີມ ພະນັກງານທີ່ມີປະສິດທິພາບສູງ ໄປສູ່ບັດບາດໜ້າວຽກທີ່ທ້າທາຍຍິ່ງຂຶ້ນ.

ii) ພັດທະນາຍົກຄວາມສາມາດຂອງພະນັກງານ - ສົ່ງເສີມການກ້າວຂ້າມໄປສູ່ການປ່ຽນແປງ ແລະ ຝຶກອົບຮົມໜ້າວຽກໃນສາຍງານອື່ນ.

iii) ຮຸກຍູ້ ໃຫ້ມີການຄິດຄົ້ນນະວັດຕະກຳໃໝ່ໆ.

5. ແຜນຍອດຂາຍໃນປີ 2022

i) ລູກຄ້າໂຄງການ/B2B

ລູກຄ້າ	ແຜນ ປີ 2023 (ລິດ)
B2B	**162.554.000**

ii) ລູກຄ້າປ້ຳນ້ຳມັນ

ລ/ດ	ລູກຄ້າ	ແຜນ ປີ 2023 (ລິດ)
1	ປ້ຳນ້ຳມັນ ພລາຕິນ້ຳ/Platinum	12.475.000
2	ປ້ຳນ້ຳມັນ ໂກລ/Gold	28.343.000
3	ປ້ຳນ້ຳມັນ ມາດຕະຖານ/Standard	28.694.000
4	ປ້ຳນ້ຳມັນ ທ້ອງຖິ່ນພັດທະນາ/Thongthin	10.801.000
ລວມ		**80.313.000**

ນອກຈາກຂະຫຍາຍຍອດຂາຍນ້ຳມັນແລ້ວ ຍັງມີການຂະຫຍາຍປ້ຳນ້ຳມັນ ເພີ່ມອີກ 9 ປ້ຳ ຄືດັ່ງນີ້:

- ປ້ຳນ້ຳມັນ ໂກລ/Gold ຈຳນວນ 4 ປ້ຳ; ແລະ
- ປ້ຳນ້ຳມັນ ມາດຕະຖານ/Standard ຈຳນວນ 5 ປ້ຳ.

iii) ລູກຄ້ານ້ຳມັນເຕົາ, ຢາງໝາກຕອຍ ແລະ ນ້ຳມັນເຄື່ອງ

ລ/ດ	ລູກຄ້າ	ແຜນ ປີ 2023 (ລິດ)
1	ນ້ຳມັນເຕົາ	ຕາມການສັ່ງຊື້ຂອງ ລູກຄ້າ
2	ຢາງໝາກຕອຍ	ຕາມການສັ່ງຊື້ຂອງ ລູກຄ້າ
3	ນ້ຳມັນເຄື່ອງ	ຕາມການສັ່ງຊື້ຂອງ ລູກຄ້າ
ລວມ/Total		

ຫຼັງຈາກທ່ານ ທ່ານ ມາກ ລຸວັນ, ສະມາຊິກສະພາບໍລິຫານ ໄດ້ລາຍງານໂດຍຫຍໍ້ໃນວາລະນີ້ແລ້ວ ກໍໄດ້ມອບເວທີຄືນໃຫ້ ປະທານກອງປະຊຸມ ແລະ ທ່ານກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ວາລະນີ້, ເຊິ່ງມີຄຳຖາມ ແລະ ການຊີ້ແຈງດັ່ງນີ້:

- ❖ **ຄຳຖັນ ແລະ ຂໍ້ສະເໜີ ຈາກ ທ່ານ ໄກວັນ ກາດາວານິດ (Mr. Kraiwal KADAVANICH), ຜູ້ຖືຮຸ້ນມາດ້ວຍຕົນເອງ:** ຕາມຄວາມເປັນຈິງແລ້ວ ຜາພນິດຂອງບໍລິສັດບໍ່ຄວນຈະຕົກລົບ ຈາກເຫດການທີ່ໄດ້ກ່າວໄປໃນວາລະຂ້າງເທິງ. ດັ່ງນັ້ນ, ສະເໜີໃຫ້ບໍລິສັດນຳເອົາການຄຸ້ມຄອງບໍລິຫານ ເລື່ອງຜາພນິດຂອງອົງກອນໃນລະດັບສາກົນ (international recognition) ເຂົ້າໃນແຜນດຳເນີນທຸລະກິດຂອງບໍລິສັດປະຈຳປີ 2023 ເພື່ອເຮັດໃຫ້ຜາພນິດ ຂອງບໍລິສັດດີຂຶ້ນ.

- → **ທ່ານ ມາກ ລຸວັນ, ສະມາຊິກສະພາບໍລິຫານ:** ສະແດງຄວາມຂອບໃຈຕໍ່ຄຳແນະນຳຂອງທ່ານ ເຫັນດີຕາມທີ່ທ່ານໄດ້ກ່າວໄປວ່າ ບໍລິສັດຕ້ອງໄດ້ໃຫ້ຄວາມສຳຄັນໃນເລື່ອງການປະຕິບັດງານໃຫ້ສອດຄ່ອງຕາມລະບຽບການໂດຍສະເພາະແມ່ນ ການຄຸ້ມຄອງບໍລິຫານອົງກອນ ເຊິ່ງທາງບໍລິສັດເອງກໍ່ໄດ້ໃຫ້ຄວາມສຳຄັນໃນເລື່ອງດັ່ງກ່າວ ເປັນລຳດັບຕົ້ນໆ ໃນການປັບປຸງ ແລະ ຈັດຕັ້ງປະຕິບັດຕົວຈິງ ເພື່ອໃຫ້ສອດຄ່ອງຕາມມາດຕະຖານສາກົນ.

ທ່ານປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາແຜນການດຳເນີນທຸລະກິດ ຂອງບໍລິສັດປະຈຳປີ 2023.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2023 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້:

- ເຫັນດີ 199.232.990 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 199.232.990 ສຽງ ຄິດເປັນ 100 %.

ວາລະທີ 5. ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ບໍລິສັດ PriceWaterhouseCooper (Lao) Sole Co., Ltd ("PwC") ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2023 ຢູ່ລະຫວ່າງ 34.000 ຫາ 37.000 ໂດລາສະຫະລັດ

ທ່ານ ປະທານກອງປະຊຸມ ໄດ້ລາຍງານຕໍ່ທີ່ປະຊຸມ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 154 ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະຊຸມ ສາມັນຜູ້ຖືຮຸ້ນເປັນຜູ້ເລືອກຕັ້ງຜູ້ກວດສອບບັນຊີ ແລະ ຄ່າຈ້າງຂອງຜູ້ກວດສອບບັນຊີ ໂດຍສະພາບໍລິຫານໄດ້ພິຈາລະນາ ເຫັນຄວນໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາແຕ່ງຕັ້ງ PWC ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2023 ໂດຍກຳນົດຄ່າຈ້າງຢູ່ລະຫວ່າງ 34.000 – 37.000 ໂດລາສະຫະລັດ; PWC ເປັນບໍລິສັດກວດສອບບັນຊີພາຍນອກ ທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ປທລ ໄດ້ໃຊ້ບໍລິການ PWC ເປັນຜູ້ກວດສອບບັນຊີ ພາຍນອກແຕ່ປີ 2018 ຫາ 2022 ເຫັນວ່າ PWC ມີປະສົບການ, ມີຄວາມລະອຽດຮອບຄອບໃນການທົບທວນ. ຊຶ່ງລາຍ ລະອຽດຄ່າຈ້າງແຕ່ລະປີມີດັ່ງລຸ່ມນີ້:

ປີ	ມູນຄ່າການກວດສອບ
2018	55.000
2019	34.000
2020	34.000
2021	32.000
2022	34.000 - 37.000
2023	34.000 - 37.000

ຫຼັງຈາກປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວກໍໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດ ເຫັນ ແລະ ໃຫ້ສອບຖາມໄດ້, ເຊິ່ງມີຄຳຄິດເຫັນ ແລະ ການຊີ້ແຈງດັ່ງນີ້:

- **ຄຳເຫັນ ແລະ ຂໍ້ສະເໜີ ຈາກ ທ່ານ ໄກວັນ ກາດາວານິດ (Mr. Kraiwal KADAVANICH), ຜູ້ຖືຮຸ້ນມາ ດ້ວຍຕົນເອງ:** ການຂໍມະຕິຮັບຮອງຈາກຜູ້ຖືຮຸ້ນ ໃນເລື່ອງການກຳນົດຄ່າຈ້າງຜູ້ກວດສອບບັນຊີພາຍນອກ ບໍ່ ຄວນຈະກຳນົດຊ່ອງຫວ່າງ (Gap) ຫຼື ກຳນົດຄ່າຈ້າງຂັ້ນຕ່ຳ ສະເໜີໃຫ້ກຳນົດຄ່າຈ້າງທີ່ລະບຸພຽງວ່າບໍ່ເກີນ ຈຳນວນດັ່ງກ່າວເທົ່ານັ້ນ.

→ **ທ່ານ ຫວ່າງ ຣັຕະນະວົງສ໌, ປະທານສະພາບໍລິຫານ ອິດສະຫຼະ:** ສະແດງຄວາມຂອບໃຈຕໍ່ຄຳເຫັນຂອງທ່ານ ທາງ ບໍລິສັດ ປທລ ຈະນຳເອົາຄຳແນະນຳທັ້ງໝົດ ມາພິຈາລະນາ.

ປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ຄື ບໍລິສັດ PriceWaterhouseCooper (Lao) Sole Co., Ltd ("PwC") ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2023 ຢູ່ລະຫວ່າງ 34.000 ຫາ 37.000 ໂດລາສະຫະລັດ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງ ການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ PriceWaterhouseCooper (Lao) Sole Co., Ltd ("PwC") ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2023 ຢູ່ ລະຫວ່າງ 34.000 ຫາ 37.000 ໂດລາສະຫະລັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງ ປະຊຸມຄັ້ງນີ້:

- ເຫັນດີ 199.232.990 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 199.232.990 ສຽງ ຄິດເປັນ 100 %.

ປະທານກອງປະຊຸມໄດ້ແຈ້ງໃຫ້ຜູ້ຖືຮຸ້ນຊາບວ່າ ກອງປະຊຸມໄດ້ຮັບການພິຈາລະນາ ແລະ ອະນຸມັດຄົບຖ້ວນທຸກ ວາລະຕາມໜັງສືເຊີນແລ້ວ ແລະ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳເຫັນ ແລະ ຄຳຖາມຕື່ມ, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ໃນຕອນທ້າຍຂອງກອງປະຊຸມ ທ່ານ ຫວ່າງ ຣັຕະນະວົງສ໌ ປະທານກອງປະຊຸມ ໄດ້ກ່າວໃນນາມສະພາບໍລິຫານ ຂອງບໍລິສັດ ປິໂຕຣລຽມເທຣດດິ້ງລາວ ມະຫາຊົນ ຂອບໃຈບັນດາຜູ້ຖືຮຸ້ນ ແລະ ຜູ້ຮັບມອບສິດ ທຸກທ່ານ ທີ່ໄດ້ສະລະເວລາ ມາຮ່ວມປະຊຸມໃນມື້ນີ້ ແລະ ຂອບໃຈ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ ແລະ ຜູ້ທີ່ ກ່ຽວຂ້ອງທຸກພາກສ່ວນ ທີ່ໃຫ້ກຽດເຂົ້າຮ່ວມກອງປະຊຸມໃນມື້ນີ້ ເຮັດໃຫ້ການປະຊຸມມື້ນີ້ສຳເລັດໄປໄດ້ດ້ວຍດີ.

ທີ່ປະຊຸມຜູ້ຖືຮຸ້ນບໍ່ມີຂໍ້ພິຈາລະນາອື່ນໆຕື່ມອີກ ດັ່ງນັ້ນ, ປະທານກອງປະຊຸມ ຈຶ່ງກ່າວປິດກອງປະຊຸມເວລາ 11:00 ໂມງ.

ດ້ວຍຄວາມເຄົາລົບ ແລະ ນັບຖື,

ປະທານກອງປະຊຸມ

ຫວ່າງ ຣັຕຕະນະວົງ
Vang RATANAVONG

ໝາຍເຫດ: ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ໃຫ້ຖືເອົາສະບັບພາສາລາວເປັນຫຼັກ.

(ຮ່າງ) ເອກະສານລາຍງານການເງິນ ປະຈຳປີ 2023

PETROLEUM TRADING LAO PUBLIC COMPANY

STATEMENT OF FINANCIAL POSITION
AS AT 31 DECEMBER 2023

	Notes	2023 LAK	2022 LAK
Assets			
Current assets			
Cash and cash equivalents	3	4,812,188,424	5,494,674,970
Trade accounts receivable, net	4	24,176,310,558	22,455,453,337
Inventories, net	5	800,980,532	399,335,819
Short-term loan to related parties	22.5	145,733,311,964	139,898,947,042
Other current assets	6	491,927,151,491	542,108,548,402
Total current assets		**667,449,942,969**	**710,356,959,570**
Non-current assets			
Property, plant and equipment, net	7	371,951,926,724	372,037,173,827
Intangible assets, net	8	2,083,635,172	2,896,193,364
Investment properties, net	9	199,477,136,681	200,162,726,629
Investment in subsidiaries	10	198,000,000,000	198,000,000,000
Other non-current assets	11	45,304,018,757	46,561,690,945
Total non-current assets		**816,816,717,334**	**819,657,784,765**
Total assets		**1,484,266,660,303**	**1,530,014,744,335**

Draft

Khamsone Sitthixay
Vice Chief Executive Officer

Date: XX March 2024

Chanthadom Meksavanh
Chief Finance Officer

Date: XX March 2024

The accompanying notes on pages 12 to 33 are an integral part of these financial statements.

	Notes	2023 LAK	2022 LAK
Liabilities and equity			
Liabilities			
Current liabilities			
Trade accounts payable	12	6,770,227,722	7,185,390,779
Tax payables	13	7,025,103,861	8,393,697,123
Short-term borrowings	14	293,799,915,008	191,355,503,214
Other current liabilities	15	244,650,352,617	279,178,512,954
Total current liabilities		**552,245,599,208**	**486,113,104,070**
Non-current liabilities			
Long-term borrowings	14	514,855,649,756	584,370,984,000
Total non-current liabilities		**514,855,649,756**	**584,370,984,000**
Total liabilities		**1,067,101,248,964**	**1,070,484,088,070**
Equity			
Share capital	16	470,000,000,000	470,000,000,000
Share premium	16	27,638,932,340	27,638,932,340
Revaluation surplus		313,029,203,069	313,029,203,069
Retaining earnings/(Deficits)			
Appropriated-legal reserve	17	3,708,530,711	3,708,530,711
Other reserve		1,977,267,979	1,977,267,979
Unappropriated		(399,188,522,760)	(356,823,277,834)
Total equity		**417,165,411,339**	**459,530,656,265**
Total liabilities and equity		**1,484,266,660,303**	**1,530,014,744,335**

Draft

Khamsone Sitthixay
Vice Chief Executive Officer

Date: XX March 2024

Chanthadom Meksavanh
Chief Finance Officer

Date: XX March 2024

The accompanying notes on pages 12 to 33 are an integral part of these financial statements.

PETROLEUM TRADING LAO PUBLIC COMPANY

STATEMENT OF INCOME
FOR THE YEAR ENDED 31 DECEMBER 2023

	Notes	2023 LAK	2022 LAK
Sales	18	2,050,135,402	1,733,080,077
Cost of sales	20	(92,187,130)	(64,435,437)
Gross profit		**1,957,948,272**	**1,668,644,640**
Other income	19	56,890,513,436	66,795,925,396
Foreign exchange (loss)/gain, net		(8,438,580,016)	190,454,943
Selling expenses	20	(104,096,340)	(276,727,000)
Administrative expenses	20	(26,680,512,733)	(23,758,882,306)
Operating loss		**23,625,272,619**	**44,619,415,673**
Finance expense		(65,990,517,545)	(50,585,808,240)
Net loss before income tax expenses		**(42,365,244,926)**	**(5,966,392,567)**
Income tax expenses	21	-	-
Net loss for the year		**(42,365,244,926)**	**(5,966,392,567)**
Loss per share			
Basic loss per share	22	(180)	(25)

Draft

Khamsone Sitthixay
Vice Chief Executive Officer

Date: XX March 2024

Chanthadom Meksavanh
Chief Finance Officer

Date: XX March 2024

The accompanying notes on pages 12 to 33 are an integral part of these financial statements.

PETROLEUM TRADING LAO PUBLIC COMPANY

STATEMENT OF CHANGES IN EQUITY
FOR THE YEAR ENDED 31 DECEMBER 2023

					Retaining earnings/(Deficits)			
	Notes	Share capital LAK	Share premium LAK	Revaluation surplus LAK	Appropriated legal reserve LAK	Other reserve LAK	Unappropriated LAK	Total LAK
Opening balance at 1 January 2022	16,17	**470,000,000,000**	**27,638,932,340**	-	**3,708,530,711**	**1,977,267,979**	**(350,856,885267)**	**152,467,845,763**
Addition		-	-	313,029,203,069	-	-		313,029,203,069
Net loss for the year		-	-	-	-	-	(5,966,392,567)	(5,966,392,567)
Closing balance at 31 December 2022		**470,000,000,000**	**27,638,932,340**	**313,029,203,069**	**3,708,530,711**	**1,977,267,979**	**(356,823,277,834)**	**459,530,656,265**
Opening balance at 1 January 2023	16,17	**470,000,000,000**	**27,638,932,340**	**313,029,203,069**	**3,708,530,711**	**1,977,267,979**	**(356,823,277,834)**	**459,530,656,265**
Net loss for the year		-	-	-	-	-	(42,365,244,926)	(42,365,244,926)
Closing balance at 31 December 2023		**470,000,000,000**	**27,638,932,340**	**313,029,203,069**	**3,708,530,711**	**1,977,267,979**	**(399,188,522,760)**	**417,165,411,339**

Khamsone Sitthixay
Vice Chief Executive Officer

Date: XX March 2024

Chanthadom Meksavanh
Chief Finance Officer

Date: XX March 2024

The accompanying notes on pages 12 to 33 are an integral part of these financial statements.

Draft

ອກະສານຄັດຕິດ 4

ຊີວະປະຫວັດຫຍໍ້ຂອງ ປະທານສະພາບໍລິຫານ ອິດສະລະ ຄົນໃໝ່

I. ຂໍ້ມູນສ່ວນຕົວ



ຊື່ ແລະ ນາມສະກຸນ: ທ່ານ ສີລາ ວຽງແກ້ວ
ສັນຊາດ: ລາວ, ເຊື້ອຊາດ: ລາວ
ວັນເດືອນປີເກີດ: 07 ມີນາ 1954
ບ່ອນເກີດ: ເມືອງ ໄຊເສດຖາ, ແຂວງ ອັດຕະປື, ສປປ ລາວ
ບ່ອນເຮັດວຽກ: ບໍລິສັດ ພີທີແອວ ໂຮນດິ້ງ ຈຳກັດ

ປະຫວັດການສຶກສາ ແລະ ການຝຶກອົບຮົມ

1. ລະດັບການສຶກສາ:

√ **ປະລິນຍາໂທ:**

❖ ຫົວຂໍ້ວິຊາ: ເສດຖະກິດແຫ່ງຊາດ

- ຊື່ ແລະ ທີ່ຢູ່ຂອງມະຫາວິທະຍາໄລ: ສະຖາບັນເສດຖະກິດ, ປະເທດໂປແລນ (Akademia EkonomicznoWe Wroclawiu, Poland)

√ **ປະລິນຍາເອກ:**

- ຫົວຂໍ້ວິຊາ: ການເງິນ
- ຊື່ ແລະ ທີ່ຢູ່ຂອງໂຮງຮຽນ: ມະຫາວິທະຍາໄລຫວຸດສກີ, ປະເທດ ໂປແລນ (Lodzki University, Poland)

2. ເຂົ້າຮ່ວມການຝຶກອົບຮົມ:

ລ/ດ	ຫົວຂໍ້ການຝຶກອົບຮົມ	ຈັດຝຶກອົບຮົມໂດຍ	ໄລຍະເວລາ
1	ການຄຸ້ມຄອງງົບປະມານ ແລະ ການປະຕິບັດ ຮຸບ	KOICA	14-29/09/2006
2	ການວາງແຜນດ້ານການເງິນ ແລະ ນະໂຍບາຍ ການເງິນ	I M F	10-121993
3	ການຄຸ້ມຄອງມະຫາພາກ ແລະ ການເງິນ	.J V L (AUSTRALIA)	17-28/10/2005
4	ການຕິດຕາມວາງແຜນໂຄງການ ແລະ ການປະ ເມີນຜົນໂຄງການ	AIDAB (AUSTRALIA)	20/05-27/06/1991
5	ການຄຸ້ມຄອງເສດຖະກິດມະຫາພາກ	WORLD BANK & IMF (TOKYO)	11-29/01/1993

6	The economic development institute of the world Bank, economic reforme and investment planning course	WB	20/02-11/03/1989

3.ປະຫວັດການເຮັດວຽກ:

ລ/ດ	ບ່ອນເຮັດວຽກ	ຕຳແໜ່ງ ແລະ ໜ້າທີ່ຮັບຜິດຊອບ	ໄລຍະເວລາ
1	ຄະນະກຳມະການແຜນການແຫ່ງລັດ	ວິຊາການ, ການພົວພັນເສດຖະກິດກັບຕ່າງປະເທດ	1982-1988
2	ກະຊວງເສດຖະກິດແຜນການ ແລະ ການເງິນ	ວິຊາການ ອາວຸໂສ , ພົວພັນເສດຖະກິດລະດັຍສາກົນ	1993-1995
3	ກະຊວງການເງິນ	ວິຊາການ ອາວຸໂສ ຮອງພະແນກ, ຄຸ້ມຄອງເງິນຕາຕ່າງປະເທດ	1989-1992
4	ກະຊວງການເງິນ	ຫົວໜ້າພະແນກບໍລິຫານ+ຮ່ວມມື, ບໍລິຫານ ແລະ ພົວພັນຮ່ວມມື	1996-1999
5	ກະຊວງການເງິນ	ຮອງຫົວໜ້າກົມນະໂຍບາຍການເງິນ, ຄົ້ນຄວ້ານະໂຍບາຍ ແລະ ລະບຽບດ້ານການເງິນ	1999-2000
6	ກະຊວງການເງິນ	ຮອງຫົວໜ້າຫ້ອງການກະຊວງ, ບໍລິຫານ ແລະ ສັງລວມ	2000-2001
7	ກະຊວງການເງິນ	ຮອງຫົວໜ້າຫ້ອງການກະຊວງ, ຫົວໜ້າໂຄງການຄົ້ນຕວ້ລະບຽບປະມູນ	2002-2008
8	ກະຊວງການເງິນ	ຫົວໜ້າຫ້ອງການກະຊວງ, ເສນາທິການໃຫ້ຫົວໜ້າກະຊວງ	2009-2011
9	ກະຊວງການເງິນ (ກົມກວດກາ)	ຫົວໜ້າກົມ, ກົມກວດກາການເງິນ	2011-2013
10	ກະຊວງການເງິນ	ລັດຖະມົນຕີຊ່ວຍວ່າການ/ຮອງລັດຖະມົນຕີ	2014-2019

11	ບໍລິສັດສິດທິ ໂລສິສຕິກ	ທີ່ປຶກສາອາວຸໂສ, ໃຫ້ຄຳປຶກສາ	2019
12	ບໍລິສັດໄຟຟ້າເທີນທິນບູນ	ກຳມະການສະພາບໍລິຫານ, ດ້ານລະບຽບການ	1998-2021
13	ບໍລິສັດ ລາວເດີນອາກາດ Lao Skyway	ຮອງປະທານສະພາບໍລິຫານ, ນະໂຍບາຍການເງິນ	2013-2019
14	ອົງການປະກັນສັງຄົມ	ຮອງປະທານສະພາບໍລິຫານ, ດ້ານການເງິນ	2014-2019
15	ບໍລິສັດ ໄປສະນີລາວ	ຮອງປະທານສະພາບໍລິຫານ, ດ້ານການເງິນ	2008-2014
16	ບໍລິສັດ ພີທີແອວ ໂຮນດິ້ງ	ຮອງປະທານດ້ານການຄ້າ ແລະ ລະບຽບການ, ດ້ານລະບຽບການກົດໝາຍການເງິນ	2020-ປະຈຸບັນ

ສະມາຊິກສະພາບໍລິຫານ ອົດສະລະ ຊຸດປະຈຸບັນ 2022-2024

ຊີວະປະຫວັດຫຍໍ້ຂອງ ປະທານສະພາບໍລິຫານ ອົດສະລະ



I. ຂໍ້ມູນສ່ວນຕົວ

ຊື່ ແລະ ນາມສະກຸນ: **ທ່ານ ທອ່າງ ຣັຕະນະວົງສ໌**
ສັນຊາດ: ລາວ, ເຊື້ອຊາດ: ລາວ
ວັນເດືອນປີເກີດ: 12 ມັງກອນ 1949
ບ່ອນເກີດ: ບ້ານ ຫຼົ່ງຊັນ, ເມືອງ ທຸລະຄົມ, ແຂວງ ວຽງຈັນ
ອາຊີບ: ບໍານານ
ບ່ອນປະຈໍາການ: ກະຊວງຊັບພະຍາກອນ ແລະ ສິ່ງແວດລ້ອມ
ຕໍາແໜ່ງ: ທີ່ປຶກສາກົດໝາຍ
ທີ່ຢູ່ປະຈຸບັນ: ບ້ານ ຮ່ອງແຊງ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ
ບັດປະຈໍາຕົວເລກທີ: A1-0035759
ໂທລະສັບ: 020 22212535

II. ປະຫວັດການສຶກສາ ແລະ ການຝຶກອົບຮົມ

1. ລະດັບການສຶກສາ:

√ **ປະລິນຍາຕີ**
- ຫົວຂໍ້ວິຊາ: ກົດໝາຍ ແລະ ການປົກຄອງ
- ຊື່ ແລະ ທີ່ຢູ່ຂອງໂຮງຮຽນ: ສະຖາບັນກົດໝາຍ ແລະ ການປົກຄອງແຫ່ງຊາດ, ນະຄອນຫຼວງວຽງຈັນ
- ໄລຍະເວລາ: ປີ 1972

√ **ປະລິນຍາໂທ**
- ຫົວຂໍ້ວິຊາ: ລັດຖະສາດສາຍພົວພັນລະຫວ່າງປະເທດ
- ຊື່ແລະທີ່ຢູ່ຂອງໂຮງຮຽນ: ມະຫາວິທະຍາໄລເກເບັກ, ເມືອງ ມົງເຣອານ, ປະເທດ ການາດາ
- ໄລຍະເວລາ: ປີ 1977

2. ເຂົ້າຮ່ວມການຝຶກອົບຮົມ:

ລ/ດ	ຫົວຂໍ້ການຝຶກອົບຮົມ	ຈັດຝຶກອົບຮົມໂດຍ	ໄລຍະເວລາ
1	ທິດສະດີພັກ	ໂຮງຮຽນທິດສະດີພັກຊັ້ນສູງທ່າງ່ອນ	1985
2	ການທ່ອງທ່ຽວລະດັບຜູ້ບໍລິຫານ	East-West Center, ມະຫາວິທະຍາໄລຮາວາຍ, ສະຫະລັດອາເມລິກາ	2006
3	ການທ່ອງທ່ຽວລະດັບຜູ້ບໍລິຫານ	ຮິໂຣຊິມາ, ປະເທດຍີ່ປຸ່ນ	2007
4	ການທ່ອງທ່ຽວລະດັບຜູ້ບໍລິຫານ	ຊຽງໄຮ້, ສປ ຈີນ	2008
5	ການທ່ອງທ່ຽວລະດັບຜູ້ບໍລິຫານ	ມານິບ	2009

3. ປະຫວັດການເຮັດວຽກ:

ລ/ດ	ບ່ອນເຮັດວຽກ	ຕໍາແໜ່ງ ແລະ ໜ້າທີ່ຮັບຜິດຊອບ	ໄລຍະເວລາ
1	ຫ້ອງການຮັບຜິດຊອບການຮ່ວມມືລາວ - ອາເມລິກາ	ເຈົ້າໜ້າທີ່	1977 – 1978

2	ສະຖານເອກອັກຄະລັດຖະທູດແຫ່ງ ສປ ປ ລາວ ທີ່ ກຸງປັກກິ່ງ, ສປ ຈີນ	ເລຂາທີ່ສອງ	1978 – 1981
3	ກະຊວງການຕ່າງປະເທດ	ຫົວໜ້າພະແນກອາຊີອາຄະເນ, ກົມ 3	1982 – 1983
4	ກະຊວງການຕ່າງປະເທດ	ຮອງຫົວໜ້າກົມ 3	1983 - 1986
5	ຄະນະພົວຕ່າງປະເທດສູນກາງພັກ	ຫົວໜ້າກົມພົວພັນພັກ	1986 – 1987
6	ສະຖານເອກອັກຄະລັດຖະທູດແຫ່ງສປ ປ ລາວ ທີ່ບາງກອກ, ປະເທດໄທ	ທີ່ປຶກສາ	1987 – 1990
7	ປະຈຳປະເທດ ອິສຕາລີ ແລະ ນິວຊີແລນ	ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງສປປ ລາວ	1990 1994
8	ກະຊວງການຕ່າງປະເທດ	ຫົວໜ້າກົມອາຊີ - ປາຊີຟິກ ແລະ ອາຟຣິກກາ	1995 – 1998
9	ປະຈຳປະເທດ ສະຫະລັດອາເມລິກາ, ການາດາ ແລະ ເມັກຊິກໂກ	ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງສປປ ລາວ	1998 – 2002
10	ກະຊວງການຕ່າງປະເທດ	ຫົວໜ້າກົມເອີຣົບ - ອາເມລິກາ	2002 – 2003
11	ອົງການທ່ອງທ່ຽວແຫ່ງຊາດ	ຮອງປະທານ, ຫົວໜ້າເຈົ້າໜ້າທີ່ຜູ້ອາວຸໂສ	2003 – 2011
12	ບຳນານ		2011

ຊີວະປະຫວັດຫຍໍ້ຂອງ ປະທານຄະນະກຳມະການເສດຖະກິດ ສະມາຊິກສະພາບໍລິຫານ ອິດສະລະ

I. ຂໍ້ມູນສ່ວນຕົວ



ຊື່ ແລະ ນາມສະກຸນ: ທ່ານ ວຽງຄອນ ສິດທິໄຊ
ອາຍຸ: 39 ປີ
ສັນຊາດ: ລາວ, ເຊື້ອຊາດ: ລາວ
ວັນເດືອນປີເກີດ: 13 ມັງກອນ 1984
ບ່ອນເກີດ: ບ້ານ ສຸນັນທາ, ເມືອງ: ໄກສອນພົມວິຫານ, ແຂວງ: ສະຫວັນນະເຂດ
ບ່ອນເຮັດວຽກ: ບໍລິສັດ ສິດທິ ໂລຈິສຕິກ ລາວ ຈຳກັດ

II. ປະຫວັດການສຶກສາ

1. ລະດັບການສຶກສາ:

√ **ປະລິນຍາຕີ**

❖ ສາຂາວິຊາ: ບໍລິຫານທຸລະກິດ

- ຊື່ ແລະ ທີ່ຢູ່ຂອງມະຫາວິທະຍາໄລ: ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ, ສປປ ລາວ

2. ປະຫວັດການເຮັດວຽກ:

ລ/ດ	ບ່ອນເຮັດວຽກ	ຕຳແໜ່ງ ແລະ ໜ້າທີ່ຮັບຜິດຊອບ	ໄລຍະເວລາ
1	ບໍລິສັດ ສິດທິ ໂລຈິສຕິກ ລາວ ຈຳກັດ	ຜູ້ອຳນວຍການ	2012
2	ບໍລິສັດ ສິດທິ ໂລຈິສຕິກ ໄທ ຈຳກັດ	ຜູ້ອຳນວຍການ	2015
3	ບໍລິສັດ ສຸດາພອນການຄ້າ ຂາອອກ-ຂາເຂົ້າ ຈຳກັດ	ຜູ້ອຳນວຍການ	2015
4	ສູນທາຍສະປີດ	ຜູ້ອຳນວຍການ	2015
5	ບໍລິສັດ ສິດທິ ເອັກເພສ	ຜູ້ອຳນວຍການ	2018
6	ບໍລິສັດ ສິດທິ ອິນເຕີເຟດສ	ຜູ້ອຳນວຍການ	2019
7	ບໍລິສັດ ວຽງຈັນ ໂລຊິດສະຕິກ ພາກ ຈຳກັດ	ຮອງປະທານ	2020
8	ລັດວິສະຫະກິດທ່າເຮືອຫ້ວຍທ່ອງ	ຮອງຜູ້ອຳນວຍການ	2020
9	ບໍລິສັດ ທ່າບົກທ່ານາແລ້ງ ຈຳກັດ ຜູ້ດຽວ	ຮອງປະທານ	2021
10	ສະມາຄົມ ຜູ້ຂົນສົ່ງ ແລະ ຈັດສົ່ງສິນຄ້າ ລະຫວ່າງປະເທດຂອງ ສປປ ລາວ	ຮອງປະທານ	2022

ຊີວະປະຫວັດຫຍໍ້ຂອງ ປະທານຄະນະກຳມະການກວດກາຄວາມສ່ຽງພາຍໃນ ສະມາຊິກສະພາບໍລິຫານ ອິດສະລະ

II. ຂໍ້ມູນສ່ວນຕົວ



ຊື່ ແລະ ນາມສະກຸນ: ທ່ານ ບຸນຖຸ້ມ ວົງສຸລິ
ສັນຊາດ: ລາວ, ເຊື້ອຊາດ: ລາວ
ວັນເດືອນປີເກີດ: 08 ພຶດສະພາ 1965
ບ່ອນເກີດ: ເມືອງ ປາກເຊ, ແຂວງ ຈຳປາສັກ, ສ ປປ ລາວ
ບ່ອນເຮັດວຽກ: ປະທານສະພາບໍລິຫານ, ທະນາຄານ ພົງສະຫວັນ ຈຳກັດ

III. ປະຫວັດການສຶກສາ ແລະ ການຝຶກອົບຮົມ

3. ລະດັບການສຶກສາ:

√ **ປະລິນຍາໂທ:**

❖ ຫົວຂໍ້ວິຊາ: ເສດຖະສາດ ໄຊເບີເນຕິກສ
- ຊື່ ແລະ ທີ່ຢູ່ຂອງມະຫາວິທະຍາໄລ: ສະຖາບັນ Kiev Polytechnic, Republic of Ukraine, USSR

√ **ປະລິນຍາໂທ:**

❖ ຫົວຂໍ້ວິຊາ: ເສດຖະສາດ ການພັດທະນາ; ສາຂາ ການບໍລິຫານນະໂຍບາຍການເງິນພາກລັດ ແລະ ນະໂຍບາຍເງິນຕາ.
- ຊື່ ແລະ ທີ່ຢູ່ຂອງໂຮງຮຽນ: ສະຖາບັນບັນດິດພັດທະນາບໍລິຫານສາດ (NIDA), ບາງກອກ, ປະເທດໄທ

4. ເຂົ້າຮ່ວມການຝຶກອົບຮົມ:

ລ/ດ	ຫົວຂໍ້ການຝຶກອົບຮົມ	ຈັດຝຶກອົບຮົມໂດຍ	ໄລຍະເວລາ
1	ການປັບປຸງການບໍລິຫານຄ່າໃຊ້ຈ່າຍສາທາລະນະ	ສະຖາບັນ ADB, ໂຕກຽວ, ປະເທດຍີ່ປຸ່ນ	ກໍລະກົດ 2000
2	ການຈັດຕັ້ງປະຕິບັດບໍລິຫານໜີ້ສິນ	JBIC, ໂຕກຽວ, ປະເທດຍີ່ປຸ່ນ	ມັງກອນ-ກຸມພາ 2004
3	ການວິເຄາະ ແລະ ນະໂຍບາຍ ທາງດ້ານເສດຖະສາດມະຫາພາກ	ສະຖາບັນ Joint Vienna, Austria.	ມັງກອນ-ມີນາ 2005
4	ການບໍລິຫານທາງດ້ານເສດຖະສາດມະຫາພາກ ສຳລັບ ຜູ້ບໍລິຫານອາວຸໂສ	ສະຖາບັນຝຶກອົບຮົມພາກພື້ນ-IMF, ປະເທດສິງກະໂປ	ມິຖຸນາ 2006
5	ການບໍລິຫານຕະຫຼາດພັນທະບັດ ແລະ ຕະຫຼາດຮຸ້ນ	ກະຊວງການເງິນ, ປະເທດຍີ່ປຸ່ນ	ຕຸລາ 2009
6	ການຕິດຕາມກວດກາດ້ານການເງິນ ແລະ ເສດຖະສາດພາກພື້ນ	ສະຖາບັນການທະນາຄານເກົາຫຼີ, ປະເທດເກົາຫຼີ	ພຶດສະພາ-ມິຖຸນາ 2010
7	ໂປຣແກຣມຝຶກອົບຮົມຄວາມເປັນຜູ້ນຳຂອງ ນາຍທະນາຄານ CLMVT	ຮ່ວມຈັດລະຫວ່າງ ທະນາຄານແຫ່ງປະເທດໄທ ແລະ ສະມາຄົມທະນາຄານໄທ, ບາງກອກ, ປະເທດໄທ	ພະຈິກ 2017

5. ປະຫວັດການເຮັດວຽກ:

ລ/ດ	ບ່ອນເຮັດວຽກ	ຕຳແໜ່ງ ແລະ ໜ້າທີ່ຮັບຜິດຊອບ	ໄລຍະເວລາ

1	ຫ້ອງການເລຂາ, ກະຊວງເສດຖະກິດ, ວາງແຜນ ແລະ ການເງິນ	ວິຊາການ Program	1990-1992
2	ກະຊວງການເງິນ, ສປປ ລາວ	ເລຂາທິການລັດຖະມົນຕີ	1993-1997
3	ກະຊວງການເງິນ, ສປປ ລາວ	ຮອງຜູ້ອຳນວຍການ ຫ້ອງການກວດກາ ການຈັດຊື້ສາທາລະນະ (PMO)	1998-1999
4	ພະແນກງົບປະມານແຫ່ງລັດ, ກະຊວງການເງິນ, ສປປ ລາວ	ຜູ້ອຳນວຍການຄຸ້ມຄອງໜີ້ສິນ ສາທາລະນະ	2000-2002
5	ກະຊວງການເງິນ, ສປປ ລາວ	ເລຂາທິການຫ້ອງການລັດຖະມົນຕີ, ຜູ້ອຳນວຍການ ຫ້ອງການວາງແຜນທາງ ການເງິນ	2003- ມີນາ 2007
6	ກຸ່ມທະນາຄານໂລກ (WBG), Washington D.C., USA	ທີ່ປຶກສາຜູ້ອຳນວຍການລະດັບສູງຂອງ ຫ້ອງການກຸ່ມອາຊີ	ເມສາ 2007 - ກັນຍາ 2009
7	ພະແນກນະໂຍບາຍການເງິນ, ກະຊວງການ ເງິນ, ສປປ ລາວ	ນັກເສດຖະສາດ, ຜູ້ອ□ານວຍການ ພາກສ່ວນການເງິນ ແລະ ເສດຖະສາດ ມະຫາພາກ	ພະຈິກ 2009 - ພຶດສະພາ 2010
8	ທະນາຄານ ພົງສະຫວັນ ຈຳກັດ	ທີ່ປຶກສາອາວຸໂສ ຂອງຜູ້ອ□ານວຍການ ໃຫຍ່	ສິງຫາ 2010 - ຕຸລາ 2011
9	ທະນາຄານ ພົງສະຫວັນ ຈຳກັດ	ການເງິນ	ພະຈິກ 2011 ພຶດສະພາ 2015
10	ທະນາຄານ ພົງສະຫວັນ ຈຳກັດ	ຜູ້ອຳນວນການໃຫຍ່	ມິຖຸນາ 2015 ທັນວາ 2019
11	ທະນາຄານ ພົງສະຫວັນ ຈຳກັດ	ປະທານສະພາບໍລິຫານ	ມັງກອນ 2019 - ປະຈຸບັນ

6. ການເຮັດບົດວິໄຈຄົ້ນຄວ້າ

ລ/ດ	ຫົວຂໍ້ບົດວິໄຈ	ຂອບເຂດການສຶກສາ & ຄົ້ນຄວ້າ	ປີທີ່ອອກບົດວິໄຈ
1	ປັດໄຈທີ່ສົ່ງຜົນກະທົບຕໍ່ຄວາມບໍ່ແນ່ນອນຂອງລາຄາ ແລະ ອັດຕາເງິນເຟີ້ໃນປະເທດລາວ	ສປປ ລາວ	2000
2	ເພີ່ມທະວີການໃຫ້ບໍລິການຄຸ້ມຄອງໜີ້ສິນ ສາທາລະນະ	ສປປ ລາວ	2009
3	ການປັບປຸງປະສິດທິພາບລາຍຮັບຂອງລັດຖະບານໃນ ປະເທດລາວ	ສປປ ລາວ	2010
4	ເອກະສານການວິເຄາະເສດຖະສາດມະຫາພາກ	ສປປ ລາວ	

ຊີວະປະຫວັດຫຍໍ້ຂອງ ປະທານຄະນະກຳມະການກວດສອບພາຍໃນ ສະມາຊິກສະພາບໍລິຫານ ອິດສະລະ

I. ຂໍ້ມູນສ່ວນຕົວ



ຊື່ ແລະ ນາມສະກຸນ: ທ່ານ ສຈ ດາວອນ ຫວ່າງວິຈິດ
ອາຍຸ: 75 ປີ
ສັນຊາດ: ລາວ, ເຊື້ອຊາດ: ລາວ
ວັນເດືອນປີເກີດ: 1 ສິງຫາ 1948.
ບ່ອນເກີດ: ບ້ານ ນາເຫຼັກ, ເມືອງ ສາລະວັນ, ແຂວງ ສາລະວັນ.
ບ່ອນເຮັດວຽກ: ປຶກສາກົດໝາຍ (ສະຖາບັນຄົ້ນຄວ້າ ການພັດທະນາ ເສດຖະກິດ - ສັງຄົມ ນະຄອນຫຼວງວຽງຈັນ ແລະ ສູນກາງແນວລາວສ້າງຊາດ)

II. ປະຫວັດການສຶກສາ ແລະ ການຝຶກອົບຮົມ

1. ລະດັບການສຶກສາ:

√ **ປະລິນຍາຕີ:**

❖ ຊື່ ແລະ ທີ່ຢູ່ຂອງໂຮງຮຽນ: ສະຖາບັນກົດໝາຍ ແລະ ການປົກຄອງ ແຫ່ງຊາດລາວ
- ໄລຍະເວລາ: 1973

√ **ປະລິນຍາໂທ:**

❖ ຫົວຂໍ້ວິຊາ: ກົດໝາຍ
- ຊື່ ແລະ ທີ່ຢູ່ຂອງໂຮງຮຽນ: ມະຫາວິທະຍາໄລ ແຫ່ງລັດ ອາແຊກບາຍຊັນ, ອາດີດສະຫະພາບໂຊຫວຽດ
- ໄລຍະເວລາ: 1984

2. ເຂົ້າຮ່ວມການຝຶກອົບຮົມ:

ລ/ດ	ຫົວຂໍ້ການຝຶກອົບຮົມ	ຈັດຝຶກອົບຮົມໂດຍ	ວັນທີ ແລະ ໄລຍະເວລາ ການເຂົ້າຮ່ວມ
1	ກົດໝາຍ ແລະ ວຽກງານຕຸລາການ	ປະເທດ ຝຣັ່ງ ແລະ ປະເທດອື່ນ	

3. ປະຫວັດການເຮັດວຽກ:

ລ/ດ	ບ່ອນເຮັດວຽກ	ຕຳແໜ່ງ ແລະ ໜ້າທີ່ຮັບຜິດຊອບ	ໄລຍະເວລາ
1	ກົມກົດໝາຍ, ກະຊວງຍຕິທຳ	ກົດໝາຍ	1975 – 1978
2	ກົມໂຄສະນາ ແລະ ເຜີຍແຜ່ກົດໝາຍ, ກົມ ກົດໝາຍ, ກະຊວງຍຸຕິທຳ	ໂຄສະນາ ແລະ ເຜີຍແຜ່ກົດໝາຍ	1985 - 1990
3	ສານປະຊາຊົນ ສູງສຸດ	ຮອງປະທານ	1990- 2006
4	ສະພາແຫ່ງຊາດ	ສະມາຊິກ ສະພາແຫ່ງຊາດຊຸດທີ VI, ຮອງປະທານ ກຳມາທິການກົດໝາຍ	2006 - 2011
5	ສະພາແຫ່ງຊາດ	ເປັນສະມຊິກ ສະພາແຫ່ງຊາດ ຊຸດທີ VII, ປະທານກຳມາທິການກົດໝາຍ	2011 - 2016
6	ນະຄອນຫຼວງວຽງຈັນ ແລະ ສູນກາງແນວລາວ ສ້າງຊາດ	ທີ່ປຶກສາກົດໝາຍ (ສະຖາບັນຄົ້ນຄວ້າ ການພັດທະນາເສດຖະກິດ ສັງຄົມ	2016 -ປັດຈຸບັນ

<u>ເອກະສານຄັດຕິດ 5</u>

ໃບມອບສັນທະ

ຂຽນທີ.....
ວັນທີ.....ເດືອນ.....ປີ.....

(1) ຂ້າພະເຈົ້າ.....ສັນຊາດ..... ວັນທີ ເດືອນ ແລະ ປີເກີດ..... ບັດປະຈຳຕົວເລກທີ.....ຢູ່ເຮືອນ ເລກທີ.....ຖະໜົນ.....ບ້ານ.....ເມືອງ..... ແຂວງ.....

(2) ເປັນຜູ້ຖືຮຸ້ນຂອງ ບໍລິສັດ ປີໂຕຣເທຣດດິ້ງ ລາວ ມະຫາຊົນ ໂດຍຖືຮຸ້ນສາມັນຈຳນວນລວມທັງໝົດ.....ຮຸ້ນ ເຊິ່ງເທົ່າກັບຈຳນວນທີ່ຈະລົງຄະແນນສຽງໄດ້.

(3) ຂໍມອບໝາຍໃຫ້ (ກະລຸນາໃສ່ເຄື່ອງໝາຍ ✓ ລົງໃນຊ່ອງຜູ້ຮັບມອບສິດພຽງທ່ານໃດທ່ານໜຶ່ງ)

☐ (1) ທ່ານ/ທ່ານ ນາງ.....ອາຍຸ.....ປີບັດປະຈຳຕົວເລກທີ .....ຢູ່ເຮືອນ ເລກທີ..... ຖະໜົນ..... ບ້ານ .....ເມືອງ..... ແຂວງ..... ຫຼື

☐ (2) ທ່ານ ຫວ່າງ ຣັຕະນະວົງສ໌ ອາຍຸ 75 ປີ, ບ້ານ ຮ່ອງແຂງ, ເມືອງ ຈັນທະບູລີ, ແຂວງ ນະຄອນຫຼວງວຽງຈັນ ຫຼື

☐ (3) ທ່ານ ວຽງຄອນ ສິດທິໄຊ ອາຍຸ 40 ປີ, ບ້ານ ສນັນທາ, ເມືອງ ໄກສອນພົມວິຫານ, ແຂວງ ສະຫວັນນະເຂດ ຫຼື

☐ (4) ທ່ານ ບຸນຖັນ ວົງສຸລີ ອາຍຸ 58 ປີ, ເມືອງ ປາກເຊ , ແຂວງ ແຂວງ ຈຳປາສັກ, ສ ປປ ລາວ ຫຼື

☐ (5) ທ່ານ ສຈ ດາວອນ ຫວ່າງວິຈິດ ອາຍຸ 76 ປີ, ບ້ານ ນາເຫຼັກ, ເມືອງ ສາລະວັນ ແຂວງ ສາລະວັນ,.

ຄົນໃດຄົນໜຶ່ງພຽງຄົນດຽວ ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ໃນວັນທີ 30 ເມສາ 2023 ເວລາ 8:30 ໂມງ, ທີ່ຫ້ອງປະຊຸມຊັ້ນ 8 ອາຄານຕະຫຼາດຫຼັກຊັບ ລາວ, ຖະໜົນ T4, ບ້ານໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ຫຼື ມື້ໄດ້ເລື່ອນໄປໃນວັນ, ເວລາ ແລະ ສະຖານທີ່ອື່ນດ້ວຍ.

(4) ຂ້າພະເຈົ້າຂໍມອບໝາຍໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມ ດັ່ງນີ້:

- ☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ;
- ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ ແລະ ມີສິດຈະພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໃນບາງວາລະ;
- ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ.

ວາລະທີ 01: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 02: ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2023 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2023

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 03: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 04: ພິຈາລະນາ ແລະ ຮັບຮອງບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2023 ອັນເນື່ອງມາຈາກບໍລິສັດ ຂາດທຶນໃນຊຸມປີຜ່ານມາ

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 05: ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ PriceWaterhouseCooper (Lao) Sole Co., Ltd ("PwC") ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2024 ບໍ່ເກີນ 37.000 ໂດລາສະຫະລັດ

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 06: ພິຈາລະນາ ແລະ ຮັບຮອງການລາອອກຈາກຕຳແໜ່ງ ປະທານສະພາບໍລິຫານ ປທລ ຂອງ ທ່ານ ຫວ່າງ ຣັຕະນະວົງສ໌ ອັນເນື່ອງມາຈາກຄົບວາລະ

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 07: ພິຈາລະນາ ແລະ ຮັບຮອງ ທ່ານ ສີລາ ວຽງແກ້ວ ເປັນ ປະທານສະພາບໍລິຫານ ອິດສະລະ

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 08: ພິຈາລະນາ ແລະ ຮັບຮອງ ອາຍຸການຂອງສະມາຊິກສະພາບໍລິຫານ ປທລ ປະຈຳສີ່ກປີ 2025-2027

☐ ເຫັນດີ ☐ ບໍ່ເຫັນດີ

(5) ການລົງຄະແນນສຽງຂອງຜູ້ຕາງໜ້າ ໃນວາລະການປະຊຸມໃດທີ່ບໍ່ເປັນໄປຕາມທີ່ລະບຸໄວ້ໃນໃບມອບສັນທະສະບັບນີ້ໃຫ້ຖືວ່າການລົງຄະແນນສຽງນັ້ນ ບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນສຽງຂອງຂ້າພະເຈົ້າໃນຖານະຜູ້ຖືຮຸ້ນ;

(6) ໃນກໍລະນີທີ່ຂ້າພະເຈົ້າບໍ່ໄດ້ລະບຸຄວາມຕ້ອງການໃນການລົງຄະແນນສຽງ ໃນວາລະໃດໄວ້ ຫຼື ລະບຸບໍ່ຈະແຈ້ງໃຫ້ຖືວ່າເຫັນດີ;

(7) ການກະທຳໃດ ທີ່ຜູ້ຕາງໜ້າໄດ້ກະທຳໄປໃນກອງປະຊຸມ, ເວັ້ນແຕ່ກໍລະນີທີ່ຜູ້ຕາງໜ້າບໍ່ລົງຄະແນນສຽງຕາມທີ່ຂ້າພະເຈົ້າລະບຸໃນໃບມອບສັນທະສະບັບນີ້, ໃຫ້ຖືວ່າຂ້າພະເຈົ້າໄດ້ກະທຳດວ້ຍຕົນເອງທຸກຢ່າງ.

ລົງລາຍເຊັນ ຜູ້ຖືຮຸ້ນທີ່ມອບໝາຍ ລົງລາຍເຊັນ ຜູ້ຕາງໜ້າ

ຊື່ ແລະ ນາມສະກຸນ:..... ຊື່ ແລະ ນາມສະກຸນ:.....

<u>ໝາຍເຫດ</u>

1. ຜູ້ຖືຮຸ້ນທີ່ມອບໝາຍຈະຕ້ອງມອບໝາຍໃຫ້ຜູ້ຕາງໜ້າພຽງທ່ານດຽວເປັນຜູ້ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງ ລວມທັງບໍ່ສາມາດແບ່ງແຍກຈຳນວນຮຸ້ນໃຫ້ຜູ້ຕາງໜ້າຫຼາຍທ່ານເພື່ອແຍກການລົງຄະແນນສຽງໄດ້; ແລະ
2. ກົດໝາຍວ່າດ້ວຍທະບຽນສານ (ສະບັບປັບປຸງ) ເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009 ກຳນົດວ່າ ເພື່ອເປັນການຮັບປະກັນຄວາມຜູກພັນຂອງຜູ້ມອບໝາຍ ແລະ ຜູ້ຕາງໜ້າທາງດ້ານກົດໝາຍ, ດັ່ງນັ້ນ ໃບມອບສັນທະສະບັບນີ້ຈະຕ້ອງໄດ້ນຳໄປຈົດທະບຽນສານນຳສຳນັກງານທະບຽນສານ, ກະຊວງຍຸຕິທຳ ໃນນີ້ບໍລິສັດຈະບໍ່ຮັບຜິດຊອບໃດໆ ໃນກໍລະນີທີ່ໃບມອບສັນທະ ສະບັບນີ້ທີ່ຍື່ນຕໍ່ບໍລິສັດບໍ່ໄດ້ຈົດທະບຽນສານ.

ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີເພື່ອເຂົ້າຮ່ວມປະຊຸມ
Instruction about the document and evidence to be present prior to attending the meeting

ເພື່ອຄວາມສະດວກໃນການລົງທະບຽນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ຂອງ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ຈະເຂົ້າມາຮ່ວມກອງປະຊຸມ. ກະລຸນານຳໜັງສືເຊີນປະຊຸມ, ໃບເຂົ້າຮ່ວມກອງປະຊຸມທີ່ອອກໃຫ້ໂດຍຕະຫຼາດຫຼັກຊັບລາວ ແລະ ໃບມອບສັນທະ (ສຳຫຼັບຜູ້ຕາງໜ້າ) ມາພ້ອມເອກະສານ ທີ່ສາມາດນຳໃຊ້ຢັ້ງຢືນຕົນເອງຕາມແຕ່ລະກໍລະນີດັ່ງນີ້:

For convenience in the registration process to attend the Annual General Shareholder's Meeting for the year 2023 of Petroleum Trading Lao Public Company, The shareholders or the proxies who will attend the meeting are required to bring the invitation to the meeting, the Letter for attending the meeting issued by the Lao Securities Exchange and the proxy (applicable for the proxy only) together with the documents for proof of identity as indicated for each circumstance below:

1. ຜູ້ເຂົ້າຮ່ວມທີ່ເປັນບຸກຄົນ / attendees who are natural persons.
   ໃຫ້ນຳເອົາເອກະສານໃດໜຶ່ງຂອງຕົນເອງດັ່ງຕໍ່ໄປນີ້ມາສະແດງເວລາລົງທະບຽນ. Shall present one of the following documents of their own at the time of registration.
   1.1 ບັດປະຈຳຕົວ / Identification Card.
   1.2 ສຳມະໂນຄົວ / Family Book.
   1.3 ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ)/ Passport (For the foreign investors).
2. ຜູ້ເຂົ້າຮ່ວມທີ່ເປັນນິຕິບຸກຄົນ / attendees who are legal person.
   ໃຫ້ນຳເອົາເອກະສານໃດໜຶ່ງທີ່ກຳນົດໄວ້ໃນຂໍ້ 1 ຂ້າງເທິງພ້ອມກັບເອກະສານໃດໜຶ່ງດັ່ງຕໍ່ໄປນີ້ມາສະແດງເວລາລົງທະບຽນ. Shall present one of the documents as given in 1. Above plus one of the following documents at the time of registration.
   2.1 ໃບອະນຸຍາດນັກລົງທຶນ / Investment license.
   2.2 ໃບທະບຽນວິສາຫະກິດ / Certificate of Enterprise Registration (Affidavit).
   2.3 ໃບທະບຽນອາກອນສະບັບລ້າສຸດ / Most recent Tax Certificate.


ສຳລັບຜູ້ເຂົ້າຮ່ວມທີ່ບໍ່ແມ່ນຜູ້ອຳນວຍການຕ້ອງໄດ້ນຳເອົາໃບມອບສັນທະຈາກຜູ້ອຳນວຍການທີ່ມີສິດອຳນາດມາເພີ່ມຕື່ມອີກ. For attendee who is not the authorized director shall have the proxy as attached hereto signed by the authorized director.

ເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມຊຶ່ງເປັນພາສາຕ່າງປະເທດ ຕ້ອງແປເປັນພາສາລາວ ໂດຍມີການເຊັນຢັ້ງຢືນຄວາມຖືກຕ້ອງໃນການແປຈາກບໍລິສັດແປພາສາທີ່ໜ້າເຊື່ອຖືໄດ້ ສ□ າລັບພາສາຕ່າງປະເທດແມ່ນອະນຸຍາດໃຫ້ສຳລັບພາສາອັງກິດເທົ່ານັ້ນ. ບໍລິສັດ ປິໂຕຣເທຣດດິ້ງ ລາວ ມະຫາຊົນ ມີສິດປະຕິເສດເອກະສານອ້າງອີງໃດໆທີ່ບໍ່ເປັນໄປຕາມການກຳນົດນີ້.

All documents and evidence in the foreign language which are required to present prior to attending the meeting must be translated into Lao language and the translation shall be certified an acceptable translation company. The foreign language is permitted only for English. PTL has the right to reject any documents contradicting this provision.

ເອກະສານຄັດຕິດ 7

ແຜນທີ່ສະຖານທີ່ຈັດປະຊຸມ



ສະຖານທີ່: ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ **(LSX)**,
ຖະໜົນ T4, ບ້ານ ໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ,
ສປປ ລາວ. ໂທລະສັບ: +856 (21) 265 394, ແຟັກ: +856 (21) 265394